ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 211 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 09 ສິງຫາ 2018

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການໃຫ້ວັກຊີນກັນພະຍາດ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 093/ສພຊ, ລົງວັນທີ 25 ມິຖຸນາ 2018 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການໃຫ້ວັກຊີນກັນພະຍາດ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 013/ຄປຈ, ລົງວັນທີ 23 ກໍລະກົດ 2018.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ການໃຫ້ວັກຊີນກັນພະຍາດ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 093 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 25 / 06 / 18

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການໃຫ້ວັກຊີນກັນພະຍາດ

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການໃຫ້ວັກຊີນກັນພະຍາດ ໃນວາລະກອງປະຊຸມ ຄັ້ງວັນທີ 25 ມິຖຸນາ 2018.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການໃຫ້ວັກຊີນກັນພະຍາດ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 52 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 25 ມິຖຸນາ 2018

# ກົດໝາຍ
# ວ່າດ້ວຍການໃຫ້ວັກຊີນກັນພະຍາດ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວໃຫ້ວັກຊີນກັນພະຍາດ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການຈັດຕັ້ງປະຕິບັດຢ່າງທົ່ວເຖິງ, ເປັນລະບົບ, ຕໍ່ເນື່ອງ ແລະ ຍືນຍົງ ໂດຍການມີສ່ວນຮ່ວມ ແລະ ເປັນເຈົ້າການ ຂອງທຸກພາກສ່ວນໃນສັງຄົມ ແນໃສ່ປົກປ້ອງ ສຸຂະພາບ, ຊີວິດ ແລະ ຊັບສິນ ຂອງພົນລະເມືອງ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍຈາກການເຈັບປ່ວຍທີ່ເກີດຈາກພະຍາດ ທີ່ກັນໄດ້ດ້ວຍວັກຊີນກັນພະຍາດ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2 ການໃຫ້ວັກຊີນກັນພະຍາດ

ການໃຫ້ວັກຊີນກັນພະຍາດ ແມ່ນ ການນຳເອົາວັກຊີນກັນພະຍາດເຂົ້າໄປໃນຮ່າງກາຍຂອງຄົນ ດ້ວຍວິທີການທາງດ້ານການແພດ ເຊັ່ນ ສັກ, ຢອດ, ດື່ມ ຫຼື ວິທີການອື່ນ ເພື່ອກະຕຸ້ນຮ່າງກາຍໃຫ້ສ້າງພູມຄຸ້ມກັນ ໃນການກັນ ແລະ ຕ້ານພະຍາດ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ວັກຊີນ ໝາຍເຖິງ ຜະລິດຕະພັນທາງການແພດ ທີ່ຜະລິດຈາກເຊື້ອພະຍາດ ແລະ ທາດພິດຂອງພະຍາດ ໂດຍຜ່ານຂະບວນການທາງວິທະຍາສາດ ທີ່ກະຕຸ້ນລະບົບການສ້າງພູມຄຸ້ມກັນຂອງຮ່າງກາຍ;
2. ພູມຄຸ້ມກັນ ໝາຍເຖິງ ສະພາບຄວາມພ້ອມຂອງຮ່າງກາຍ ທີ່ສາມາດຕ້ານກັບພະຍາດໃດໜຶ່ງໄດ້ດ້ວຍຕົວມັນເອງ;

3. **ເຊື້ອຈຸລິນຊີ ແລະ ເຊື້ອຈຸລະໂລກ** ໝາຍເຖິງ ສິ່ງທີ່ມີຊີວິດນ້ອຍໆ ທີ່ບໍ່ສາມາດເຫັນດ້ວຍຕາເປົ່າ ຊຶ່ງກໍ່ໃຫ້ເກີດ ຫຼື ບໍ່ກໍ່ໃຫ້ເກີດພະຍາດ ໃນຮ່າງກາຍຂອງຄົນເຮົາ;

4. **ນ້ຳລະລາຍ** ໝາຍເຖິງ ທາດແຫຼວຊະນິດໜຶ່ງທີ່ມີຄວາມເຂັ້ມຂຸ້ນສະເພາະ ຊຶ່ງນຳໃຊ້ປະສົມກັບວັກຊີນກັນພະຍາດຊະນິດເປັນຝຸ່ນ ຫຼື ກ້ອນ;

5. **ອຸປະກອນການເກັບຮັກສາວັກຊີນກັນພະຍາດ** ໝາຍເຖິງ ຕູ້ເຢັນ, ຕູ້ແຊ່ແຂງ, ຫີບເຢັນ, ຖົງພາຍວັກຊີນ ຫຼື ອຸປະກອນອື່ນທີ່ໃຊ້ສະເພາະ ຊຶ່ງປະກອບເປັນຕ່ອງໂສ້ຄວາມເຢັນ ເພື່ອເກັບຮັກສາວັກຊີນກັນພະຍາດ;

6. **ອຸປະກອນການໃຫ້ວັກຊີນກັນພະຍາດ** ໝາຍເຖິງ ເຂັມແຮງ, ເຂັມສັກຢາ, ທໍ່ຢອດ ຫຼື ເຄື່ອງມືອື່ນທີ່ນຳໃຊ້ເຂົ້າໃນການໃຫ້ວັກຊີນກັນພະຍາດ;

7. **ອຸປະກອນຕິດຕາມອຸນຫະພູມ** ໝາຍເຖິງ ເຄື່ອງບັນທຶກອຸນຫະພູມໃນອຸປະກອນເກັບຮັກສາວັກຊີນກັນພະຍາດ;

8. **ຊີຊີ** ໝາຍເຖິງ ຫົວໜ່ວຍວັດແທກບໍລິມາດ ເປັນເຊັນຕີແມັດກ້ອນ ຂອງວັກຊີນກັນພະຍາດ ແລະ ນ້ຳລະລາຍ;

9. **ກັບນິລະໄພ** ໝາຍເຖິງ ກັບເຈ້ຍແຂງສະເພາະ ທີ່ໃຊ້ບັນຈຸເຂັມແຮງ ແລະ ເຂັມສັກຢາທີ່ໄດ້ຖືກນຳໃຊ້ແລ້ວ ເພື່ອປ້ອງກັນບໍ່ໃຫ້ເຂັມປັກຄົນ, ສັດ, ປົນເປື້ອນສິ່ງແວດລ້ອມ ແລະ ແຜ່ເຊື້ອພະຍາດ;

10. **ກຸ່ມເປົ້າໝາຍ** ໝາຍເຖິງ ກຸ່ມຄົນ ທີ່ຢູ່ໃນເກນອາຍຸ ແລະ ກຸ່ມຄົນໃນເຂດທີ່ມີຄວາມສ່ຽງ ທີ່ກະຊວງສາທາລະນະສຸກ ໄດ້ກຳນົດໃນແຕ່ລະໄລຍະ ຊຶ່ງຈະຕ້ອງໄດ້ຮັບວັກຊີນກັນພະຍາດໃດໜຶ່ງສະເພາະ;

11. **ແຜ່ນພູມ** ໝາຍເຖິງ ຕາຕະລາງ ຫຼື ຮູບພາບ ຕິດຕາມກຸ່ມເປົ້າໝາຍທີ່ໄດ້ຮັບວັກຊີນກັນພະຍາດ;

12. **ແຜນວາດ** ໝາຍເຖິງ ແຜນສະແດງຂອບເຂດໃດໜຶ່ງ ທີ່ໜ່ວຍບໍລິການໃຫ້ວັກຊີນຮັບຜິດຊອບ ເປັນຕົ້ນ ກຸ່ມບ້ານ, ບ້ານ, ພູມສັນຖານ;

13. **ຜູ້ພາດໂອກາດ** ໝາຍເຖິງ ບຸກຄົນຢູ່ໃນກຸ່ມເປົ້າໝາຍທີ່ຈະໄດ້ຮັບວັກຊີນກັນພະຍາດ ແຕ່ບໍ່ໄດ້ຮັບ ຫຼື ໄດ້ຮັບແລ້ວແຕ່ບໍ່ຄົບຕາມຕາຕະລາງການໃຫ້ວັກຊີນກັນພະຍາດ;

14. **ອຸປະກອນຕິດຕາມກ່ອງວັກຊີນ** ໝາຍເຖິງ ປ້າຍທີ່ຕິດໃສ່ກ່ອງວັກຊີນກັນພະຍາດ ຊຶ່ງເຮັດດ້ວຍເຈ້ຍພິເສດ ແລະ ມີຈຸດໝາຍ ເພື່ອຕິດຕາມຄຸນນະພາບຂອງວັກຊີນກັນພະຍາດ;

15. **ຊີວະວິທະຍາທາງການແພດ** ໝາຍເຖິງ ຂະບວນການໃນການນຳໃຊ້ວິທະຍາສາດທຳມະຊາດທີ່ຄົ້ນຄວ້າກ່ຽວກັບສິ່ງທີ່ມີຊີວິດດ້ານໂຄງສ້າງ, ການເຮັດວຽກ, ການຈະເລີນເຕີບໂຕ ແລະ ການວິວັດທະນາການເພື່ອນຳເຂົ້າໃນຂະບວນການທາງດ້ານການແພດ ເຊັ່ນ ການຜະລິດວັກຊີນເປັນຕົ້ນ;

16. **ປະຕິປັກ** ໝາຍເຖິງ ຄຳສັບທີ່ມາຈາກຄຳວ່າ "ປະຕິກິລິຍາ" ແລະ "ປໍລະປັກ" ເປັນ ປະຕິກິລິຍາທີ່ບໍ່ເພິ່ງປາຖະໜາ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບການໃຫ້ວັກຊີນກັນພະຍາດ**

ລັດ ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ ຕໍ່ການໃຫ້ວັກຊີນກັນພະຍາດ ດ້ວຍການໂຄສະນາ ເຜີຍແຜ່, ໃຫ້ຄວາມຮູ້, ຂໍ້ມູນ ຂ່າວສານ ແກ່ພົນລະເມືອງ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ ພ້ອມທັງ ຊຸກຍູ້, ປຸກລະດົມ, ສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ກຸ່ມເປົ້າໝາຍໄດ້ຮັບວັກຊີນກັນພະຍາດຢ່າງຄົບຖ້ວນ ແລະ ທົ່ວເຖິງ.

ລັດ ສະໜອງງົບປະມານ, ວັດຖຸປະກອນ, ເຕັກນິກ, ບຸກຄະລາກອນ ແລະ ສົ່ງເສີມການຄົ້ນຄວ້າທາງດ້ານວິທະຍາສາດ ເພື່ອພັດທະນາການໃຫ້ວັກຊີນກັນພະຍາດໃຫ້ພຽງພໍ, ຮັບປະກັນທາງດ້ານປະສິດທິພາບ ແລະ ປະສິດທິຜົນ.

ລັດ ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ການບໍລິການ, ໃຫ້ການຮ່ວມມື, ປະກອບສ່ວນ ແລະ ລົງທຶນໃສ່ການໃຫ້ວັກຊີນກັນພະຍາດ.

### ມາດຕາ 5 ຫຼັກການກ່ຽວກັບການໃຫ້ວັກຊີນກັນພະຍາດ

ການໃຫ້ວັກຊີນກັນພະຍາດ ໃຫ້ປະຕິບັດ ຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາສາທາລະນະສຸກ ໃນແຕ່ລະໄລຍະ;
2. ຄຸ້ມຄອງຢ່າງລວມສູນ, ເປັນເອກະພາບ, ສະເໝີພາບ, ໂປ່ງໃສ ແລະ ຍຸຕິທຳ;
3. ຮັບປະກັນຄວາມປອດໄພຕໍ່ຊີວິດ, ສຸຂະພາບຂອງ ພົນລະເມືອງ ດ້ວຍການນຳໃຊ້ເຕັກໂນໂລຊີ ທີ່ທັນສະໄໝ, ເໝາະສົມ ແລະ ປະຕິບັດຢ່າງຖືກຕ້ອງຕາມຫຼັກການວິທະຍາສາດທາງການແພດ;
4. ສອດຄ່ອງກັບສະພາບຕົວຈິງຂອງການເກີດພະຍາດຢູ່ ພາຍໃນ, ຕ່າງປະເທດ, ພາກພື້ນ ແລະ ສາກົນ;
5. ຮັບປະກັນ ການປະສານສົມທົບ ລະຫວ່າງ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ;
6. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 6 ສິດ ແລະ ພັນທະຂອງພົນລະເມືອງ

ພົນລະເມືອງທຸກຄົນ ໂດຍບໍ່ຈຳແນກເພດ, ໄວ, ຊົນເຜົ່າ, ເຊື້ອຊາດ, ສັນຊາດ, ສາສະໜາ, ຖານະທາງດ້ານເສດຖະກິດ, ສັງຄົມ ໂດຍສະເພາະ ແມ່ຍິງ ແລະ ເດັກນ້ອຍ ລ້ວນແຕ່ມີສິດໄດ້ຮັບວັກຊີນກັນພະຍາດ, ຂໍ້ມູນຂ່າວສານ ແລະ ການແນະນຳ ກ່ຽວກັບການໃຫ້ ແລະ ຮັບວັກຊີນກັນພະຍາດ ແລະ ມີພັນທະໃນການຮັກສາສຸຂະພາບຂອງຕົນ, ຄອບຄົວ ແລະ ຊຸມຊົນ ພ້ອມທັງປະກອບສ່ວນ, ເປັນເຈົ້າການຮ່ວມມື ແລະ ເຂົ້າຮ່ວມໃນການໃຫ້ວັກຊີນກັນພະຍາດ.

### ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດຳລົງຊີວິດ ຢູ່ ສປປ ລາວ.

### ມາດຕາ 8 ການຮ່ວມມືສາກົນ

ລັດ ສົ່ງເສີມ ການພົວພັນ ແລະ ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການໃຫ້ວັກຊີນກັນພະຍາດດ້ວຍການ ແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ການກັນ, ໂຕ້ຕອບ ແລະ ຄວບຄຸມການລະບາດຂອງພະຍາດທີ່ສາມາດກັນໄດ້ດ້ວຍວັກຊີນກັນພະຍາດ, ການຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ທາງດ້ານວິຊາການ ເພື່ອເຮັດໃຫ້ການໃຫ້ວັກຊີນກັນພະຍາດ ຂະຫຍາຍຕົວ, ເຂັ້ມແຂງ, ທັນສະໄໝ ແລະ ທັນການ, ປະຕິບັດ ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ວັກຊີນກັນພະຍາດ

**ມາດຕາ 9 ວັກຊີນກັນພະຍາດ**

ວັກຊີນກັນພະຍາດ ແມ່ນ ຜະລິດຕະພັນຊີວະວິທະຍາທາງການແພດ ທີ່ນໍາໃຊ້ເພື່ອກະຕຸ້ນຮ່າງກາຍໃຫ້ສ້າງພູມຄຸ້ມກັນ ໃນການກັນ ແລະ ຕ້ານພະຍາດໃດໜຶ່ງສະເພາະ.

ວັກຊີນກັນພະຍາດມີ ສີ່ ໝວດ ແລະ ສາມ ຊະນິດ.

**ມາດຕາ 10 ໝວດວັກຊີນກັນພະຍາດ**

ວັກຊີນກັນພະຍາດ ມີ ສີ່ ໝວດ ດັ່ງນີ້:

1. ເຊື້ອທີ່ມີຊີວິດ ຊຶ່ງປຸງແຕ່ງມາຈາກ ເຊື້ອຈຸລິນຊີ ຫຼື ເຊື້ອຈຸລະໂຣກ ທີ່ຖືກປ່ຽນສະພາບໃຫ້ອ່ອນແອ ແລະ ບໍ່ສາມາດກໍ່ໃຫ້ເກີດພະຍາດໄດ້;
2. ເຊື້ອຕາຍ ຊຶ່ງປຸງແຕ່ງມາຈາກ ເຊື້ອຈຸລິນຊີ ຫຼື ເຊື້ອຈຸລະໂຣກ ທີ່ຖືກຂ້າຕາຍດ້ວຍວິທີທາງດ້ານການແພດ;
3. ເຊື້ອບໍລິສຸດ ຊຶ່ງປຸງແຕ່ງມາຈາກ ຊິ້ນສ່ວນທີ່ເປັນໂມເລກຸນນ້ອຍໆ ຂອງເຊື້ອພະຍາດ;
4. ສິ່ງສະກັດຈາກທາດພິດ ຊຶ່ງຖືກປຸງແຕ່ງຈາກການສະກັດທາດພິດ ຂອງເຊື້ອຈຸລິນຊີ ແລ້ວເຮັດໃຫ້ມັນບໍ່ເປັນອັນຕະລາຍ ແລະ ສາມາດສ້າງພູມຄຸ້ມກັນພະຍາດໄດ້.

**ມາດຕາ 11 ຊະນິດວັກຊີນກັນພະຍາດ**

ວັກຊີນກັນພະຍາດ ມີ ສາມ ຊະນິດ ດັ່ງນີ້:

1. ນໍ້າ;
2. ຝຸ່ນ;
3. ກ້ອນ.

ວັກຊີນກັນພະຍາດຊະນິດນໍ້າ ສາມາດນໍາໃຊ້ໄດ້ເລີຍ ບໍ່ຈໍາເປັນຕ້ອງປະສົມກັບນໍ້າລະລາຍ;

ສໍາລັບ ວັກຊີນກັນພະຍາດຊະນິດຝຸ່ນ ແລະ ກ້ອນ ກ່ອນຈະນໍາໄປໃຊ້ ຕ້ອງໄດ້ປະສົມກັບນໍ້າລະລາຍເສຍກ່ອນ.

ນໍ້າລະລາຍທີ່ຈະປະສົມກັບວັກຊີນກັນພະຍາດຊະນິດຝຸ່ນ ແລະ ກ້ອນນັ້ນ ຕ້ອງແມ່ນນໍ້າລະລາຍທີ່ມາຈາກໂຮງງານດຽວກັນ ແລະ ເລກກຸ່ມຜະລິດດຽວກັນ.

## ພາກທີ III
## ວຽກງານໃຫ້ວັກຊີນກັນພະຍາດ

**ມາດຕາ 12 ວຽກງານໃຫ້ວັກຊີນກັນພະຍາດ**

ວຽກງານໃຫ້ວັກຊີນກັນພະຍາດ ມີ ດັ່ງນີ້:

1. ການກໍານົດການໃຫ້ວັກຊີນກັນພະຍາດ;

2. ການເກັບຮັກສາ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ;

3. ການບໍລິການໃຫ້ວັກຊີນກັນພະຍາດ;

4. ການຢຸດນຳໃຊ້, ການທຳລາຍ ວັກຊີນກັນພະຍາດ ແລະ ອຸປະກອນການໃຫ້ວັກຊີນກັນພະຍາດ;

5. ການຄຸ້ມຄອງເຫດການປະຕິກິລິຍາ ຫຼັງການໃຫ້ວັກຊີນກັນພະຍາດ.

## ໝວດທີ 1
## ການກຳນົດການໃຫ້ວັກຊີນກັນພະຍາດ

### ມາດຕາ 13 ການກຳນົດການໃຫ້ວັກຊີນກັນພະຍາດ

ການໃຫ້ວັກຊີນກັນພະຍາດ ມີ 2 ແບບ ດັ່ງນີ້:

1. ແບບບັງຄັບ;
2. ແບບສະໝັກໃຈ.

### ມາດຕາ 14 ການໃຫ້ວັກຊີນແບບບັງຄັບ

ການໃຫ້ວັກຊີນແບບບັງຄັບ ແມ່ນ ການໃຫ້ວັກຊີນທີ່ຈຳເປັນແກ່ບຸກຄົນ ໃນກຸ່ມເປົ້າໝາຍຕາມເກນອາຍຸ, ເພດ ທີ່ຕ້ອງໄດ້ຮັບວັກຊີນກັນພະຍາດຄົບຖ້ວນຕາມການກຳນົດຂອງ ລັດຖະບານ ແລະ ສາກົນ ເຊັ່ນ ເດັກເກີດໃໝ່, ເດັກອາຍຸລຸ່ມ ໜຶ່ງ ປີ, ເດັກ ໜຶ່ງ ປີ ຫາ ລຸ່ມ ຫ້າ ປີ, ໄວໜຸ່ມຍິງ ຫຼື ຊາຍ ອາຍຸ ເກົ້າ ປີ ຫາ ສິບສີ່ ປີ, ແມ່ຍິງໄວຈະເລີນພັນ ອາຍຸ ສິບຫ້າ ປີ ຫາ ສີ່ສິບຫ້າ ປີ ລວມທັງແມ່ຍິງຖືພາ.

ວັກຊີນທີ່ກຳນົດໄວ້ໃນແບບບັງຄັບ ປະກອບມີ ວັກຊີນກັນພະຍາດວັນນະໂລກ (BCG), ໂປລີໂອ (Polio), ຄໍຕີບ (Diphtheria), ໄອໄກ່ (Pertussis), ບາດທະຍັກ (Tetanus), ຕັບອັກເສບ ບີ (Hepatitis B), ເຍື່ອຫຸ້ມສະໝອງອັກເສບ (Hib), ປອດອັກເສບຮ້າຍແຮງ (PCV), ສະໝອງອັກເສບຍີ່ປຸ່ນ (JE), ໝາກແດງໃຫຍ່ (Measles) ແລະ ໝາກແດງນ້ອຍ (Rubella), ກັນຖອກທ້ອງ (Rota virus), ກັນມະເຮັງປາກມົດລູກ (HPV), ກັນບາດທະຍັກ ແລະ ຄໍຕີບ ໃນແມ່ຍິງໄວຈະເລີນພັນ ແລະ ແມ່ຍິງຖືພາ (Td). ປະເພດວັກຊີນແບບບັງຄັບອາດເພີ່ມຂຶ້ນຕາມຄວາມຈຳເປັນ.

ໃນກໍລະນີມີການລະບາດຂອງພະຍາດໃດໜຶ່ງ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອ ແຜ່ລາມເປັນວົງກວ້າງ ພົນລະເມືອງທຸກຄົນທີ່ຢູ່ໃນເຂດການລະບາດ ຕ້ອງໄດ້ຮັບວັກຊີນກັນພະຍາດຊະນິດນັ້ນ ຕາມການຕົກລົງເຫັນດີຂອງລັດຖະບານ ແລະ ສາກົນ.

### ມາດຕາ 15 ການໃຫ້ວັກຊີນແບບສະໝັກໃຈ

ການໃຫ້ວັກຊີນແບບສະໝັກໃຈ ແມ່ນ ຄວາມສະໝັກໃຈ ຂອງພົນລະເມືອງເພື່ອຮັບວັກຊີນກັນພະຍາດທີ່ບໍ່ກຳນົດໃນແບບບັງຄັບ ຢູ່ຕາມສະຖານທີ່ບໍລິການສາທາລະນະສຸກຂອງລັດ ແລະ ເອກະຊົນ ຊຶ່ງບຸກຄົນ, ນິຕິບຸກຄົນ ໂດຍເສຍຄ່າ ຫຼື ບໍ່ເສຍຄ່າ ອີງຕາມຊະນິດວັກຊີນ ເປັນຕົ້ນ ວັກຊີນກັນພະຍາດໄຂ້ຫວັດລະດູການ (Seasonal Flu), ວັກຊີນກັນພະຍາດວໍ້ (Rabies) ແລະ ວັກຊີນອື່ນ ທີ່ກະຊວງສາທາລະນະສຸກ ອະນຸຍາດ.

ການຈັດຕັ້ງປະຕິບັດການໃຫ້ວັກຊີນແບບສະໝັກໃຈ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2

## ການເກັບຮັກສາວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ

### ມາດຕາ 16 ການເກັບຮັກສາວັກຊີນກັນພະຍາດ

ການເກັບຮັກສາວັກຊີນກັນພະຍາດ ຕ້ອງຢູ່ໃນເງື່ອນໄຂ ແລະ ອຸນຫະພູມທີ່ຖືກຕ້ອງຕາມມາດຕະຖານການເກັບຮັກສາວັກຊີນກັນພະຍາດແຕ່ລະຊະນິດ ທີ່ໄດ້ກຳນົດໄວ້ໃນຄູ່ມືພາກປະຕິບັດຕົວຈິງການໃຫ້ວັກຊີນກັນພະຍາດ ເພື່ອຮັກສາຄຸນນະພາບຂອງວັກຊີນກັນພະຍາດ.

### ມາດຕາ 17 ການຕິດຕາມອຸນຫະພູມ

ການຕິດຕາມອຸນຫະພູມ ແມ່ນ ການກວດກາ ແລະ ບັນທຶກ ອຸນຫະພູມໃນອຸປະກອນການເກັບຮັກສາວັກຊີນກັນພະຍາດ.

ການກວດກາ ແລະ ບັນທຶກອຸນຫະພູມນັ້ນ ໃຫ້ປະຕິບັດທຸກວັນ ວັນລະ ສອງຄັ້ງ, ຕອນເຊົ້າ ແລະ ຕອນແລງ ແລະ ຕ້ອງບັນທຶກຕົວເລກຕາມການຊີ້ບອກຂອງອຸປະກອນຕິດຕາມອຸນຫະພູມ ໃສ່ໃບຕິດຕາມອຸນຫະພູມທຸກຄັ້ງ.

ໃນກໍລະນີ ທີ່ອຸປະກອນຕິດຕາມອຸນຫະພູມຊີ້ບອກອຸນຫະພູມ ຕໍ່າກວ່າ ສູນ ອົງສາເຊ ຫຼື ວັກຊີນກັນພະຍາດ ອາດຜ່ານການກ້າມແຂງມາກ່ອນແລ້ວ ຕ້ອງທົດສອບການກ້າມແຂງ ດ້ວຍວິທີການທາງດ້ານການແພດຕາມທີ່ໄດ້ກຳນົດໄວ້ໃນຄູ່ມືພາກປະຕິບັດຕົວຈິງການໃຫ້ວັກຊີນກັນພະຍາດ.

ໃນກໍລະນີ ອຸປະກອນຕິດຕາມອຸນຫະພູມ ຫາກມີການເຕືອນເຖິງຄວາມຜິດປົກກະຕິຂອງອຸນຫະພູມພະນັກງານກ່ຽວຂ້ອງ ຕ້ອງແກ້ໄຂຕາມຫຼັກວິຊາການ ໃຫ້ທັນເວລາ.

### ມາດຕາ 18 ການເກັບຮັກສາອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ

ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ຕ້ອງເກັບຮັກສາໄວ້ໃນເງື່ອນໄຂທີ່ກຳນົດໄວ້ໃນຄູ່ມືພາກປະຕິບັດຕົວຈິງການໃຫ້ວັກຊີນກັນພະຍາດ.

### ມາດຕາ 19 ການບຳລຸງຮັກສາອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ

ການບຳລຸງຮັກສາອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ແມ່ນການກວດກາ, ອະນາໄມ ແລະ ສ້ອມແປງ ເພື່ອຮັບປະກັນໃຫ້ອຸປະກອນແຕ່ລະຊະນິດ ຢູ່ໃນເງື່ອນໄຂທີ່ສາມາດນຳໃຊ້ງານໄດ້ຢ່າງປອດໄພ ແລະ ມີປະສິດທິຜົນ.

ສຳລັບວິທີການລະອຽດ ໃນການບຳລຸງຮັກສາອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາວັກຊີນກັນພະຍາດ ໄດ້ກຳນົດໄວ້ໃນຄູ່ມືພາກປະຕິບັດຕົວຈິງການໃຫ້ວັກຊີນກັນພະຍາດ.

## ໝວດທີ 3
## ການບໍລິການໃຫ້ວັກຊີນກັນພະຍາດ

**ມາດຕາ 20 ການບໍລິການໃຫ້ວັກຊີນກັນພະຍາດ**

ການບໍລິການໃຫ້ວັກຊີນກັນພະຍາດ ມີ ດັ່ງນີ້:

1. ໜ່ວຍບໍລິການຄົງທີ່;
2. ໜ່ວຍບໍລິການເຄື່ອນທີ່.

ໜ່ວຍບໍລິການຄົງທີ່ ແມ່ນ ໜ່ວຍບໍລິການທີ່ປະຈໍາຢູ່ສະຖານທີ່ບໍລິການປິ່ນປົວຂອງລັດທຸກຂັ້ນ ແລະ ຫ້ອງກວດພະຍາດເອກະຊົນ.

ໜ່ວຍບໍລິການເຄື່ອນທີ່ ແມ່ນ ໜ່ວຍວິຊາການທີ່ເຄື່ອນໄຫວບໍລິການໃຫ້ວັກຊີນກັນພະຍາດນອກສະຖານທີ່ບໍລິການປິ່ນປົວ ໃນຈຸດຕ່າງໆ ເປັນຕົ້ນ ບ້ານ, ສໍານັກງານ, ອົງການ ຫຼື ເຂດຊຸມຊົນ.

**ມາດຕາ 21 ຂັ້ນຕອນການໃຫ້ບໍລິການວັກຊີນກັນພະຍາດ**

ການໃຫ້ບໍລິການວັກຊີນກັນພະຍາດ ມີ ຂັ້ນຕອນ ດັ່ງນີ້:

1. ການສ້າງແຜນຈຸລະພາກເພື່ອເຂົ້າເຖິງກຸ່ມເປົ້າໝາຍ;
2. ການກະກຽມການບໍລິການໃຫ້ວັກຊີນກັນພະຍາດ;
3. ການບັນທຶກວັກຊີນ ແລະ ອຸປະກອນການໃຫ້ວັກຊີນກັນພະຍາດ;
4. ການໃຫ້ບໍລິການວັກຊີນກັນພະຍາດຢູ່ຈຸດບໍລິການ;
5. ການບັນທຶກ ແລະ ສະຫຼຸບຜົນຂອງການໃຫ້ວັກຊີນກັນພະຍາດ;
6. ການຕິດຕາມການໃຫ້ວັກຊີນກັນພະຍາດ;
7. ການລາຍງານຜົນຂອງການບໍລິການໃຫ້ວັກຊີນກັນພະຍາດ.

**ມາດຕາ 22 ການສ້າງແຜນຈຸລະພາກເພື່ອເຂົ້າເຖິງກຸ່ມເປົ້າໝາຍ**

ແຜນຈຸລະພາກເພື່ອເຂົ້າເຖິງກຸ່ມເປົ້າໝາຍ ແມ່ນ ແຜນເບື້ອງຕົ້ນທີ່ໃຊ້ເປັນເຄື່ອງມືໃນການຈັດຕັ້ງປະຕິບັດການໃຫ້ວັກຊີນກັນພະຍາດ ເພື່ອເຮັດໃຫ້ການບໍລິການເຂົ້າເຖິງທຸກຊຸມຊົນ.

ການສ້າງແຜນຈຸລະພາກເພື່ອເຂົ້າເຖິງກຸ່ມເປົ້າໝາຍ ຕ້ອງມີການເກັບກໍາຂໍ້ມູນທາງດ້ານພູມສາດ ແລະ ປະຊາກອນສາດເພື່ອກໍານົດແຜນກິດຈະກໍາບູລິມະສິດ ເປັນຕົ້ນ ກຸ່ມເປົ້າໝາຍ, ບຸກຄະລາກອນ, ຜູ້ມີສ່ວນຮ່ວມ, ຈໍານວນວັກຊີນກັນພະຍາດ, ອຸປະກອນການໃຫ້ວັກຊີນກັນພະຍາດ, ງົບປະມານ, ຕາຕະລາງການເຄື່ອນໄຫວ, ພາຫະນະ, ຮູບແບບວິທີໃຫ້ບໍລິການ ແລະ ແຜນຕິດຕາມປະເມີນຜົນ ຊຶ່ງຕ້ອງສ້າງ ຫຼື ປັບປຸງ ໃນແຕ່ລະປີ ໃຫ້ສອດຄ່ອງກັບຕົວຈິງ ຂອງແຕ່ລະທ້ອງຖິ່ນ ແລະ ລະດູການໂດຍປະສານສົມທົບ ແລະ ມີສ່ວນຮ່ວມຂອງຊຸມຊົນ.

**ມາດຕາ 23 ການກະກຽມການບໍລິການໃຫ້ວັກຊີນກັນພະຍາດ**

ການກະກຽມການບໍລິການໃຫ້ວັກຊີນກັນພະຍາດ ແມ່ນ ການກຽມຄວາມພ້ອມທາງດ້ານບຸກຄະລາກອນ, ອຸປະກອນ, ວັກຊີນກັນພະຍາດ, ບັນຊີກຸ່ມເປົ້າໝາຍ ໃຫ້ຄົບຖ້ວນພຽງພໍ ໂດຍປະສານສົມທົບກັບອົງການ

ປົກຄອງບ້ານ ເພື່ອກະກຽມສະຖານທີ່ ແລະ ແຈ້ງໃຫ້ກຸ່ມເປົ້າໝາຍຮູ້ກ່ອນລ່ວງໜ້າກ່ຽວກັບ ວັນ, ເວລາ ແລະ ສະຖານທີ່ ໃນການເຂົ້າມາຮັບວັກຊີນກັນພະຍາດ.

ໃນກໍລະນີ ທີ່ບໍ່ສາມາດໃຫ້ບໍລິການໄດ້ ຕາມກຳນົດ ວັນ, ເວລາ ທີ່ໄດ້ແຈ້ງກ່ອນລ່ວງໜ້ານັ້ນ ພະນັກງານແພດ ຕ້ອງລາຍງານໃຫ້ຂັ້ນເທິງຂອງຕົນ ພ້ອມທັງແຈ້ງບອກເຫດຜົນ ໃຫ້ແກ່ອົງການປົກຄອງບ້ານທີ່ກ່ຽວຂ້ອງ.

### ມາດຕາ 24 ການບັນທຶກວັກຊີນ ແລະ ອຸປະກອນການໃຫ້ວັກຊີນກັນພະຍາດ

ການບັນທຶກວັກຊີນ ແລະ ອຸປະກອນການໃຫ້ວັກຊີນກັນພະຍາດ ແມ່ນ ການບັນທຶກຈຳນວນວັກຊີນ ແລະ ອຸປະກອນການໃຫ້ວັກຊີນກັນພະຍາດ ທຸກຊະນິດ ທີ່ໄດ້ ຮັບ ແລະ ຈ່າຍ ທຸກຄັ້ງ.

ພະນັກງານທີ່ມີໜ້າທີ່ ຮັບ ແລະ ຈ່າຍ ວັກຊີນ ແລະ ອຸປະກອນການໃຫ້ວັກຊີນກັນພະຍາດ ຕ້ອງບັນທຶກໃສ່ໃນແບບພິມໃຫ້ ລະອຽດ, ຈະແຈ້ງ ເປັນຕົ້ນ ຊື່ໂຮງງານ, ຊື່ວັກຊີນກັນພະຍາດ, ເລກກຸ່ມຜະລິດ, ວັນ, ເດືອນ, ປີ ຜະລິດ ແລະ ໝົດອາຍຸ, ຂະໜາດບັນຈຸຕໍ່ກ່ອງ, ສະພາບຂອງອຸປະກອນຕິດຕາມກ່ອງວັກຊີນ.

### ມາດຕາ 25 ການໃຫ້ບໍລິການວັກຊີນກັນພະຍາດຢູ່ຈຸດບໍລິການ

ການໃຫ້ບໍລິການວັກຊີນກັນພະຍາດຢູ່ຈຸດບໍລິການ ໃຫ້ປະຕິບັດ ດັ່ງນີ້:

1. ເຕົ້າໂຮມກຸ່ມເປົ້າໝາຍ, ໃຫ້ສຸຂະສຶກສາ ແລະ ກວດສຸຂະພາບ ກ່ອນໃຫ້ວັກຊີນກັນພະຍາດ;
2. ລົງທະບຽນໃສ່ປຶ້ມບັນທຶກປະຫວັດການຮັບວັກຊີນກັນພະຍາດ;
3. ຄັດເລືອກກຸ່ມເປົ້າໝາຍ ກ່ອນໃຫ້ວັກຊີນກັນພະຍາດ;
4. ແນະນຳໃຫ້ຜູ້ຈະຮັບບໍລິການວັກຊີນກັນພະຍາດ ຢູ່ໃນທ່າຖືກຕ້ອງ ແລະ ມີຄວາມປອດໄພ;
5. ໃຫ້ວັກຊີນກັນພະຍາດຢ່າງຖືກຕ້ອງ ຕາມວິທີການ ແລະ ກຸ່ມເປົ້າໝາຍຜູ້ຮັບບໍລິການ;
6. ໃຫ້ຄຳແນະນຳທີ່ຖືກຕ້ອງ ຕາມຫຼັກການດ້ານການແພດ ຫຼັງໃຫ້ວັກຊີນກັນພະຍາດ;
7. ມອບບັດຢັ້ງຢືນການຮັບວັກຊີນກັນພະຍາດ;
8. ຕິດຕາມ ແລະ ປະເມີນ ອາການຜູ້ຮັບວັກຊີນກັນພະຍາດ ຫຼັງໃຫ້ວັກຊີນກັນພະຍາດ;
9. ເກັບມ້ຽນອຸປະກອນ ແລະ ສິ່ງເສດເຫຼືອ ຈາກການໃຫ້ບໍລິການ ຢ່າງຖືກຕ້ອງຕາມຫຼັກການດ້ານການແພດ.

### ມາດຕາ 26 ການບັນທຶກ ແລະ ສະຫຼຸບຜົນຂອງການໃຫ້ວັກຊີນກັນພະຍາດ

ພາຍຫຼັງ ສຳເລັດການໃຫ້ບໍລິການວັກຊີນກັນພະຍາດ ຕ້ອງສະຫຼຸບ ແລະ ສັງລວມ ຜົນການໃຫ້ບໍລິການວັກຊີນກັນພະຍາດທຸກຄັ້ງ ໃສ່ໃນແບບພິມສະຫຼຸບ ໃນແຕ່ລະວັນ ໃຫ້ລະອຽດ, ຄົບຖ້ວນ ແລະ ຈະແຈ້ງ ເປັນຕົ້ນ ຈຳນວນຜູ້ຮັບບໍລິການ, ຈຳນວນວັກຊີນກັນພະຍາດ ແລະ ອຸປະກອນການໃຫ້ວັກຊີນກັນພະຍາດ ທີ່ໄດ້ນຳໃຊ້ແລ້ວແຈ້ງໃຫ້ອົງການປົກຄອງບ້ານທີ່ກ່ຽວຂ້ອງ ກ່ຽວກັບຈຳນວນຜູ້ໄດ້ຮັບວັກຊີນກັນພະຍາດ ແລະ ຜູ້ທີ່ພາດໂອກາດ ພ້ອມທັງແຈ້ງການນັດໝາຍໃຫ້ຜູ້ພາດໂອກາດໄປຮັບບໍລິການວັກຊີນກັນພະຍາດ ໃນວັນ, ເວລາ ແລະ ສະຖານທີ່ບໍລິການໃນຄັ້ງຕໍ່ໄປ.

ພະນັກງານແພດ ທີ່ລົງເຄື່ອນໄຫວໃຫ້ການບໍລິການ ຕ້ອງລາຍງານ ກ່ຽວກັບຜົນການໃຫ້ບໍລິການວັກຊີນກັນພະຍາດ ຕໍ່ຂັ້ນເທິງຂອງຕົນທຸກຄັ້ງ.

### ມາດຕາ 27 ການຕິດຕາມການໃຫ້ວັກຊີນກັນພະຍາດ

ການຕິດຕາມການໃຫ້ວັກຊີນກັນພະຍາດ ແມ່ນ ການຕິດຕາມກວດກາການໃຫ້ບໍລິການວັກຊີນກັນພະຍາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍສະບັບນີ້ ຊຶ່ງດຳເນີນຢ່າງເປັນປົກກະຕິໂດຍຫົວໜ້າ ຫຼື ຄະນະຮັບຜິດຊອບໂຄງການ ຫຼື ໜ່ວຍງານການໃຫ້ວັກຊີນກັນພະຍາດ ຢູ່ແຕ່ລະຂັ້ນ.

ໜ່ວຍງານຕິດຕາມການບໍລິການໃຫ້ວັກຊີນກັນພະຍາດ ຕ້ອງບັນທຶກຜົນການຕິດຕາມກວດກາການໃຫ້ວັກຊີນກັນພະຍາດທຸກຄັ້ງ ຢ່າງເປັນລະບົບ.

### ມາດຕາ 28 ການລາຍງານຜົນຂອງການບໍລິການໃຫ້ວັກຊີນກັນພະຍາດ

ໜ່ວຍບໍລິການໃຫ້ວັກຊີນກັນພະຍາດ ຕ້ອງລາຍງານຜົນການບໍລິການໃຫ້ວັກຊີນກັນພະຍາດ ໃຫ້ຂັ້ນເທິງຕາມສາຍຕັ້ງຂອງຕົນທຸກຄັ້ງ ດ້ວຍຮູບແບບເອກະສານ ຫຼື ເອເລັກໂຕຣນິກ.

ການລາຍງານ ຕ້ອງຮັບປະກັນຄວາມຖືກຕ້ອງ, ຄົບຖ້ວນ, ຈະແຈ້ງ ແລະ ທັນເວລາຕາມລະບົບຂໍ້ມູນຂ່າວສານສາທາລະນະສຸກ.

## ໝວດທີ 4
## ການຢຸດນຳໃຊ້, ການທຳລາຍ ວັກຊີນກັນພະຍາດ ແລະ ອຸປະກອນການໃຫ້ວັກຊີນກັນພະຍາດ

### ມາດຕາ 29 ການຢຸດນຳໃຊ້ວັກຊີນກັນພະຍາດ ແລະ ອຸປະກອນການໃຫ້ວັກຊີນກັນພະຍາດ

ວັກຊີນກັນພະຍາດທຸກຊະນິດ ຕ້ອງຢຸດນຳໃຊ້ ເມື່ອເຫັນວ່າຕົກຢູ່ໃນສະພາບໃດໜຶ່ງ ດັ່ງນີ້:

1. ມີການປ່ຽນຖ່າຍວັກຊີນກັນພະຍາດເກົ່າ ມາເປັນວັກຊີນກັນພະຍາດໃໝ່;
2. ມີການປ່ຽນແປງດ້ານການຜະລິດ;
3. ໝົດອາຍຸການນຳໃຊ້;
4. ອຸປະກອນຕິດຕາມກ່ອງວັກຊີນກັນພະຍາດປ່ຽນສີເຖິງຈຸດຫ້າມນຳໃຊ້;
5. ບໍ່ມີສະຫຼາກ ຫຼື ສະຫຼາກບໍ່ຈະແຈ້ງ;
6. ວັກຊີນກັນພະຍາດຜ່ານການກ້າມແຂງ;
7. ວັກຊີນກັນພະຍາດຊະນິດທີ່ໄດ້ປະສົມນ້ຳລະລາຍ ເກີນ ຫົກ ຊົ່ວໂມງ;
8. ມີສານເຈືອປົນ ເຊັ່ນ ກົ່ວ, ຕັງສະເຕັນ, ໂກຣມີອອມ ແລະ/ຫຼື ສານອື່ນ.

ອຸປະກອນການໃຫ້ວັກຊີນກັນພະຍາດທຸກຊະນິດ ຕ້ອງຢຸດນຳໃຊ້ ເມື່ອເຫັນວ່າຕົກຢູ່ໃນສະພາບໃດໜຶ່ງ ດັ່ງນີ້:

1. ບໍ່ຖືກຕາມມາດຕະຖານການຜະລິດ;
2. ໝົດອາຍຸການນຳໃຊ້;
3. ປ່ຽນແປງຈາກສະພາບເດີມ ຫຼື ບໍ່ປະຕິບັດຕາມວິທີການເກັບຮັກສາ.

ໃນກໍລະນີຜູ້ຜະລິດຫາກຮຽກຮ້ອງໃຫ້ສົ່ງວັກຊີນກັນພະຍາດ ແລະ ອຸປະກອນການໃຫ້ວັກຊີນກັນພະຍາດຄືນ ກະຊວງສາທາລະນະສຸກ ເປັນຜູ້ພິຈາລະນາຕົກລົງ. ສໍາລັບວິທີການນໍາສົ່ງໃຫ້ປະຕິບັດຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນຄູ່ມືພາກປະຕິບັດຕົວຈິງການໃຫ້ວັກຊີນກັນພະຍາດ.

**ມາດຕາ 30 ການທຳລາຍ ວັກຊີນ ແລະ ອຸປະກອນການໃຫ້ວັກຊີນກັນພະຍາດ**

ວັກຊີນທີ່ເສຍຄຸນ ແລະ ກ່ອງເປົ່າຂອງວັກຊີນທີ່ຖືກນຳໃຊ້ແລ້ວ ຕ້ອງທຳລາຍໃຫ້ຖືກຕາມຫຼັກການ ແລະ ມາດຕະຖານສາກົນ ດ້ວຍວິທີການຈູດໃນຂຸມເລິກ ໜຶ້ງແມັດ ແລ້ວຖົມແໜ້ນ.

ການທຳລາຍ ອຸປະກອນການໃຫ້ວັກຊີນກັນພະຍາດ ເປັນຕົ້ນ ເຂັມແຮງ ແລະ ເຂັມສັກວັກຊີນກັນພະຍາດທີ່ ເສຍຄຸນ ຫຼື ຖືກນຳໃຊ້ແລ້ວ ຕ້ອງປະຕິບັດຕາມຫຼັກການ ແລະ ມາດຕະຖານສາກົນ ດ້ວຍວິທີການໃຊ້ເຕົາເຜົາສະເພາະ ທີ່ມີຄວາມຮ້ອນສູງກວ່າ ແປດຮ້ອຍ ອົງສາຊີ ແລະ ມາດຕະການອື່ນ ທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 5
## ການຄຸ້ມຄອງເຫດການປະຕິປັກ ຫຼັງການໃຫ້ວັກຊີນກັນພະຍາດ

**ມາດຕາ 31 ເຫດການປະຕິປັກ ຫຼັງການໃຫ້ວັກຊີນກັນພະຍາດ**

ເຫດການປະຕິປັກ ຫຼັງການໃຫ້ວັກຊີນກັນພະຍາດ ແມ່ນ ເຫດການໃດໜຶ່ງ ທີ່ເກີດຂຶ້ນຈາກອາການຂ້າງຄຽງຂອງວັກຊີນ, ອາການຮ່ວມທີ່ເກີດຈາກພະຍາດຂອງຜູ້ມາຮັບວັກຊີນກັນພະຍາດ, ຄວາມຜິດພາດຂອງການປະຕິບັດ ຫຼື ຄວາມຢ້ານກົວຕໍ່ປະຕິກິລິຍາຂອງວັກຊີນກັນພະຍາດ ຫຼື ຄວາມກັງວົນຂອງຜູ້ມາຮັບວັກຊີນກັນພະຍາດ.

**ມາດຕາ 32 ອາການຂ້າງຄຽງ**

ອາການຂ້າງຄຽງ ແມ່ນ ອາການໃດໜຶ່ງ ທີ່ເກີດຂຶ້ນ ພາຍຫຼັງໄດ້ຮັບວັກຊີນກັນພະຍາດ ເປັນຕົ້ນ ຄັນຕາມຜິວໜັງ, ອອກຜື່ນແດງ, ອາການແດງຢູ່ບ່ອນສັກຢາ, ວິນຫົວ, ປວດຮາກ, ຖອກທ້ອງ, ໄຂ້, ໜາວສັ່ນ, ເມື່ອຍ, ເຈັບຫົວ, ເຈັບກ້າມຊີ້ນ, ໃຄ່ບວມ.

ຖ້າຫາກພົບເຫັນອາການຂ້າງຄຽງດັ່ງກ່າວ ຕ້ອງໄປພົບແພດ ຫຼື ສະຖານທີ່ບໍລິການປິ່ນປົວ ບ່ອນທີ່ໃກ້ທີ່ສຸດ.

**ມາດຕາ 33 ອາການຮ່ວມ**

ອາການຮ່ວມ ແມ່ນ ອາການທີ່ເກີດມາຈາກພະຍາດອື່ນ ຊຶ່ງບໍ່ກ່ຽວຂ້ອງກັບການໃຫ້ວັກຊີນກັນພະຍາດ ເປັນຕົ້ນ ພະຍາດເລືອດກ້າມຊ້ຳ, ການຂາດວິຕາມິນເຄໜຶ່ງຂອງເດັກນ້ອຍຢ່າງຮ້າຍແຮງ, ພະຍາດຊຶມເຊື້ອອື່ນທີ່ເນື່ອງຈາກຜູ້ມາຮັບວັກຊີນກັນພະຍາດບໍ່ຮູ້ພະຍາດຂອງຕົນມາກ່ອນ ຫຼື ພະນັກງານແພດບໍ່ໄດ້ຮັບຂໍ້ມູນທີ່ຖືກຕ້ອງ ຫຼື ບໍ່ສາມາດກວດພົບພະຍາດດັ່ງກ່າວ ກ່ອນໃຫ້ວັກຊີນກັນພະຍາດ.

ຖ້າຫາກພົບເຫັນອາການຮ່ວມດັ່ງກ່າວ ຕ້ອງໄປພົບແພດ ຫຼື ສະຖານທີ່ບໍລິການປິ່ນປົວ ບ່ອນໃກ້ທີ່ສຸດໂດຍດ່ວນ.

**ມາດຕາ 34 ການຄຸ້ມຄອງເຫດການປະຕິປັກ ຫຼັງການໃຫ້ວັກຊີນກັນພະຍາດ**

ແພດປິ່ນປົວ ຕ້ອງຄຸ້ມຄອງເຫດການປະຕິປັກ ຫຼັງການໃຫ້ວັກຊີນກັນພະຍາດ ດ້ວຍການ ໃຫ້ການເບິ່ງແຍງ, ແນະນຳ ແລະ ປິ່ນປົວຕາມຫຼັກການແພດ ລວມທັງ ບົ່ງມະຕິພະຍາດ, ປະເມີນຄວາມສ່ຽງ, ຄວາມຮ້າຍແຮງຂອງເຫດການປະຕິປັກຫຼັງການໃຫ້ວັກຊີນກັນພະຍາດ.

ໃນກໍລະນີຫາກເຫັນວ່າເຫດການປະຕິກິລິຍາຫຼັງການໃຫ້ວັກຊີນກັນພະຍາດ ມີຄວາມສ່ຽງຕໍ່ສຸຂະພາບ ທີ່ມີຄວາມຮ້າຍແຮງ ຕ້ອງນຳສົ່ງຜູ້ກ່ຽວໄປໂຮງໝໍທີ່ມີເງື່ອນໄຂໂດຍດ່ວນ.

### ມາດຕາ 35 ການຄຸ້ມຄອງກໍລະນີພິການ ຫຼື ເສຍຊີວິດ

ໃນກໍລະນີມີການພິການ ຫຼື ເສຍຊີວິດ ຍ້ອນເຫດການປະຕິກິລິຍາຫຼັງການໃຫ້ວັກຊີນກັນພະຍາດ ຄະນະກຳມະການກວດກາຫາສາເຫດການປະຕິກິລິຍາທີ່ກ່ຽວພັນກັບການນຳໃຊ້ຢາ, ວັກຊີນກັນພະຍາດ ແລະ ຜະລິດຕະພັນທາງການແພດອື່ນ ຕ້ອງລົງຕິດຕາມກວດກາ, ສືບຄົ້ນຫາສາເຫດ, ວິເຄາະ, ວິໄຈ ເພື່ອບົ່ງມະຕິ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ ເພື່ອປະຕິບັດມາດຕະການແກ້ໄຂຕາມກົດໝາຍ.

ລັດ ຮັບຜິດຊອບຊົດເຊີຍໃຫ້ຜູ້ພິການ ຫຼື ຄອບຄົວຜູ້ເສຍຊີວິດຕາມແຕ່ລະກໍລະນີ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ IV
## ຄວາມຮັບຜິດຊອບຕໍ່ການໃຫ້ວັກຊີນກັນພະຍາດ

### ມາດຕາ 36 ຄວາມຮັບຜິດຊອບຂອງລັດ

ລັດຖະບານ ຖືເອົາການໃຫ້ວັກຊີນກັນພະຍາດ ເປັນນະໂຍບາຍບຸລິມະສິດໜຶ່ງ ໂດຍກຳນົດໄວ້ໃນແຜນຍຸດທະສາດ, ແຜນພັດທະນາ, ໂຄງການ ແລະ ກິດຈະກຳລະອຽດ ເພື່ອຮັບປະກັນໃຫ້ພົນລະເມືອງ ໄດ້ຮັບວັກຊີນກັນພະຍາດ ຕາມຕາຕະລາງການໃຫ້ວັກຊີນກັນພະຍາດແຫ່ງຊາດ ຢ່າງຄົບຖ້ວນ ແລະ ທົ່ວເຖິງ.

ອົງການປົກຄອງທ້ອງຖິ່ນທຸກຂັ້ນ ມີຄວາມຮັບຜິດຊອບ ໃນການຊີ້ນຳ ຈັດຕັ້ງປະຕິບັດວຽກງານໃຫ້ວັກຊີນກັນພະຍາດຢູ່ໃນທ້ອງຖິ່ນຂອງຕົນ ໂດຍປະສານສົມທົບກັບຂະແໜງການສາທາລະນະສຸກ ໃຫ້ຄົບຖ້ວນ, ມີປະສິດທິພາບ, ປະສິດທິຜົນ, ທັນເວລາ ແລະ ບັນລຸຕາມຄາດໝາຍ ເກົ້າສິບຫ້າ ສ່ວນຮ້ອຍ ຂຶ້ນໄປ.

### ມາດຕາ 37 ຄວາມຮັບຜິດຊອບຂອງ ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ

ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ມີຄວາມຮັບຜິດຊອບ ໃນການສຶກສາອົບຮົມ, ປູກລະດົມ, ໂຄສະນາ ເຜີຍແຜ່, ສະໜອງຂໍ້ມູນ ຂ່າວສານ, ໃຫ້ສຸຂະສຶກສາ ແກ່ປະຊາຊົນລາວບັນດາເຜົ່າ ໃຫ້ຮັບຮູ້, ເຂົ້າໃຈຄວາມສຳຄັນ ແລະ ເຂົ້າຮ່ວມວຽກງານໃຫ້ວັກຊີນກັນພະຍາດ.

### ມາດຕາ 38 ຄວາມຮັບຜິດຊອບຂອງຊຸມຊົນ, ໂຮງຮຽນ ແລະ ຄອບຄົວ

ຊຸມຊົນ, ໂຮງຮຽນ ແລະ ຄອບຄົວ ມີຄວາມຮັບຜິດຊອບ ໃນການປູກຈິດສຳນຶກ, ສ້າງເງື່ອນໄຂອຳນວຍຄວາມສະດວກ, ປູກລະດົມ, ເປັນແບບຢ່າງ ແລະ ນຳພາລູກ, ຫຼານ ແລະ ສະມາຊິກໃນຄອບຄົວ ແລະ ນັກຮຽນ, ນັກສຶກສາ ເຂົ້າຮ່ວມໃນການໃຫ້ວັກຊີນກັນພະຍາດ.

ໂຮງຮຽນຍັງມີຄວາມຮັບຜິດຊອບ ໃນການກວດປຶ້ມຢັ້ງຢືນການຮັບວັກຊີນກັນພະຍາດ ຂອງນັກຮຽນກ່ອນເຂົ້າໂຮງຮຽນ ໃນກໍລະນີນັກຮຽນນັ້ນບໍ່ມີປຶ້ມຢັ້ງຢືນການຮັບວັກຊີນກັນພະຍາດ ຫຼື ມີປຶ້ມຢັ້ງຢືນ ແຕ່ບໍ່ຄົບ

ຖ້ອນຕາມຕາຕະລາງການໃຫ້ວັກຊີນກັນພະຍາດແຫ່ງຊາດກຳນົດໄວ້ນັ້ນ ໂຮງຮຽນມີໜ້າທີ່ແຈ້ງບອກໜ່ວຍງານບໍລິການໃຫ້ວັກຊີນທີ່ຢູ່ໃກ້ນັ້ນ ເພື່ອສືບຕໍ່ໃຫ້ວັກຊີນແກ່ນັກຮຽນຮອດສະຖານທີ່.

## ພາກທີ V
## ການປະກອບວິຊາຊີບ ແລະ ການດຳເນີນທຸລະກິດການໃຫ້ວັກຊີນກັນພະຍາດ

### ໝວດທີ 1
### ການປະກອບວິຊາຊີບການໃຫ້ວັກຊີນກັນພະຍາດ

**ມາດຕາ 39 ການປະກອບວິຊາຊີບການໃຫ້ວັກຊີນກັນພະຍາດ**

ການປະກອບວິຊາຊີບການໃຫ້ວັກຊີນກັນພະຍາດ ແມ່ນ ການປະກອບອາຊີບຂອງນັກວິຊາການດ້ານການໃຫ້ວັກຊີນກັນພະຍາດ ແລະ ຕ້ອງໄດ້ຮັບການອະນຸມັດ ຈາກກະຊວງສາທາລະນະສຸກ.

ຜູ້ປະກອບວິຊາຊີບການໃຫ້ວັກຊີນກັນພະຍາດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນພົນລະເມືອງລາວ;
2. ມີຄຸນສົມບັດ, ຈັນຍາບັນ ແລະ ຈັນຍາທຳແພດ, ມີບົດຮຽນ ແລະ ປະສົບການ ດ້ານວິຊາການປິ່ນປົວຢູ່ໂຮງໝໍຂອງລັດ ຫຼື ເອກະຊົນ ຢ່າງໜ້ອຍ ສາມ ປີ;
3. ມີປະກາສະນີຍະບັດດ້ານການແພດສາຂາໃດໜຶ່ງ ແຕ່ຊັ້ນສູງ ຫຼື ອະນຸປະລິນຍາ ຂຶ້ນໄປ;
4. ໄດ້ຮັບການຝຶກອົບຮົມ, ການຢັ້ງຢືນຈາກສະພາວິຊາຊີບການໃຫ້ວັກຊີນກັນພະຍາດ;
5. ບໍ່ເຄີຍຖືກລົງວິໄນດ້ານວິຊາຊີບການໃຫ້ວັກຊີນກັນພະຍາດ ຫຼື ຖືກລົງໂທດທາງອາຍາ ຍ້ອນການກະທຳຜິດໂດຍເຈດຕະນາ;
6. ມີສຸຂະພາບດີ.

**ມາດຕາ 40 ສະພາວິຊາຊີບການໃຫ້ວັກຊີນກັນພະຍາດ**

ສະພາວິຊາຊີບການໃຫ້ວັກຊີນກັນພະຍາດ ແມ່ນ ການຈັດຕັ້ງສັງຄົມວິຊາຊີບທີ່ຄຸ້ມຄອງບໍລິຫານດ້ວຍຕົນເອງ, ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ຂອງນັກວິຊາຊີບກ່ຽວກັບການໃຫ້ວັກຊີນກັນພະຍາດ ຊຶ່ງແມ່ນການຈັດຕັ້ງຄຽງຄູ່ກັນກັບສະພາຄຸ້ມຄອງວິຊາຊີບປິ່ນປົວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປິ່ນປົວ.

ສະພາວິຊາຊີບການໃຫ້ວັກຊີນກັນພະຍາດ ມີໜ້າທີ່ໃຫ້ຄຳປຶກສາ ກ່ຽວກັບການຄວບຄຸມຄຸນນະພາບ, ຄວາມສາມາດ, ຈັນຍາບັນ, ຈັນຍາທຳ, ມາດຕະຖານ ການປະຕິບັດງານທີ່ດີ ຂອງນັກວິຊາຊີບການໃຫ້ວັກຊີນກັນພະຍາດ ລວມທັງການຕິດຕາມ ກວດກາ ແລະ ມີສິດອອກໃບຢັ້ງຢືນການປະກອບວິຊາຊີບກ່ຽວກັບວິຊາການໃຫ້ວັກຊີນກັນພະຍາດ.

### ໝວດທີ 2
### ປະເພດທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ

**ມາດຕາ 41 ປະເພດທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ**

ທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ ມີ ດັ່ງນີ້:

1. ການບໍລິການວິໄຈວັກຊີນກັນພະຍາດ;

2. ການຜະລິດວັກຊີນກັນພະຍາດ;

3. ການນໍາເຂົ້າ, ສົ່ງອອກ, ສົ່ງຜ່ານວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາວັກຊີນກັນພະຍາດ;

4. ການຈໍາໜ່າຍວັກຊີນກັນພະຍາດ;

5. ການບໍລິການໃຫ້ວັກຊີນກັນພະຍາດ;

6. ການສ້າງສາລະຄະດີ ແລະ ສື່ສິ່ງພິມ ກ່ຽວກັບການໃຫ້ວັກຊີນກັນພະຍາດ ເພື່ອໂຄສະນາ ແລະ ຈໍາໜ່າຍ.

**ມາດຕາ 42 ການບໍລິການວິໄຈວັກຊີນກັນພະຍາດ**

ການບໍລິການວິໄຈວັກຊີນກັນພະຍາດ ແມ່ນ ການໃຫ້ບໍລິການຄົ້ນຄວ້າ, ວິໄຈ ວັກຊີນກັນພະຍາດ ເພື່ອຊອກຫາຄຸນນະພາບ, ປະສິດທິພາບ, ຄວາມປອດໄພ ແລະ ມາດຕະຖານຂອງວັກຊີນກັນພະຍາດ.

ຜົນການຄົ້ນຄວ້າ, ວິໄຈວັກຊີນກັນພະຍາດ ຕ້ອງລາຍງານໃຫ້ກະຊວງສາທາລະນະສຸກ.

**ມາດຕາ 43 ການຜະລິດວັກຊີນກັນພະຍາດ**

ກ່ອນການຜະລິດວັກຊີນກັນພະຍາດ ບຸກຄົນ, ນິຕິບຸກຄົນ ຕ້ອງຍື່ນຄໍາຮ້ອງຂໍອະນຸຍາດຜະລິດທົດລອງ ຊຶ່ງຕ້ອງໄດ້ແຈ້ງ ສູດຕໍາລາ, ສະຫຼາກ ແລະ ຂັ້ນຕອນການຜະລິດຕໍ່ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ ຕາມຂັ້ນຕອນການຂຶ້ນທະບຽນຢາ ແລະ ປະຕິບັດຕາມຫຼັກການຜະລິດຢາທີ່ດີ ທີ່ໄດ້ຮັບການຢັ້ງຢືນ ຈາກກະຊວງສາທາລະນະສຸກ.

**ມາດຕາ 44 ການນໍາເຂົ້າ, ສົ່ງອອກ, ສົ່ງຜ່ານວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາວັກຊີນກັນພະຍາດ**

ການນໍາເຂົ້າ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາວັກຊີນກັນພະຍາດ ແມ່ນ ການບໍລິການໃນການ ນໍາເຂົ້າ, ສົ່ງອອກ ຫຼື ສົ່ງຜ່ານ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາວັກຊີນກັນພະຍາດ ທີ່ບໍ່ນໍາໃຊ້ກັບກຸ່ມເປົ້າໝາຍຕາມເກນອາຍຸ, ເພດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້.

ການນໍາເຂົ້າ ແລະ ສົ່ງອອກ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາວັກຊີນກັນພະຍາດ ຕ້ອງໄດ້ຂຶ້ນທະບຽນ ຢູ່ ກົມອາຫານ ແລະ ຢາ ກະຊວງສາທາລະນະສຸກ, ສໍາລັບການສົ່ງຜ່ານນັ້ນ ຕ້ອງແຈ້ງຕໍ່ກະຊວງສາທາລະນະສຸກ.

**ມາດຕາ 45 ການຈໍາໜ່າຍວັກຊີນກັນພະຍາດ**

ການຈໍາໜ່າຍວັກຊີນກັນພະຍາດ ແມ່ນ ການສະໜອງວັກຊີນກັນພະຍາດ ໃຫ້ກຸ່ມຄົນທີ່ສະໝັກໃຈຮັບວັກຊີນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 15 ຂອງກົດໝາຍສະບັບນີ້ ຊຶ່ງຈະຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

**ມາດຕາ 46 ການບໍລິການໃຫ້ວັກຊີນກັນພະຍາດ**

ການບໍລິການໃຫ້ວັກຊີນກັນພະຍາດ ແມ່ນ ການໃຫ້ບໍລິການວັກຊີນກັນພະຍາດ ທີ່ກະຊວງສາທາລະນະສຸກອະນຸຍາດ ເປັນຕົ້ນ ວັກຊີນກັນພະຍາດໄຂ້ຫວັດລະດູການ (Seasonal Flu), ວັກຊີນກັນພະຍາດວໍ້ (Rabies), ວັກຊີນອື່ນ ຢູ່ສະຖານທີ່ບໍລິການທີ່ໄດ້ຮັບອະນຸຍາດເທົ່ານັ້ນ.

ສໍາລັບການດໍາເນີນທຸລະກິດ ການບໍລິການໃຫ້ວັກຊີນກັນພະຍາດ ແມ່ນບໍ່ອະນຸຍາດໃຫ້ບໍລິການວັກຊີນກັນພະຍາດແບບບັງຄັບ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 14 ຂອງກົດໝາຍສະບັບນີ້.

ຜູ້ດໍາເນີນທຸລະກິດ ຕ້ອງຮັບຜິດຊອບຊົດເຊີຍໃຫ້ຜູ້ພິການ ຫຼື ຄອບຄົວຜູ້ເສຍຊີວິດ ຍ້ອນເຫດການປະຕິກິລິຍາທີ່ເກີດຈາກການບໍລິການຂອງຕົນ ຕາມແຕ່ລະກໍລະນີ ທີ່ໄດ້ກໍານົດໄວ້ໃນລະບຽບການ.

**ມາດຕາ 47 ການສ້າງສາລະຄະດີ ແລະ ສື່ສິ່ງພິມ ກ່ຽວກັບການໃຫ້ວັກຊີນກັນພະຍາດເພື່ອໂຄສະນາ ແລະ ຈໍາໜ່າຍ**

ການສ້າງສາລະຄະດີ ແລະ ສື່ສິ່ງພິມກ່ຽວກັບການໃຫ້ວັກຊີນກັນພະຍາດ ເພື່ອໂຄສະນາ ແລະ ຈໍາໜ່າຍ ແມ່ນ ການຂຽນ, ການບັນທຶກສຽງ ແລະ ຮູບພາບ ເລື່ອງຈິງ ໂດຍຜ່ານວິທີການຂອງຜູ້ຂຽນ ກ່ຽວກັບການໃຫ້ວັກຊີນກັນພະຍາດ ເພື່ອໃຫ້ສາລະຄວາມຮູ້ ແກ່ຜູ້ອ່ານ, ຜູ້ຟັງ ແລະ ຜູ້ຊົມ ໂດຍຜ່ານ ສື່ສິ່ງພິມ ແລະ ສື່ເອເລັກໂຕຣນິກ.

ການໂຄສະນາກ່ຽວກັບການໃຫ້ວັກຊີນກັນພະຍາດ ໂດຍຜ່ານສາລະຄະດີ ແລະ ສື່ສິ່ງພິມ, ການກະຈາຍສຽງ, ພາບ ແລະ ຮູບພາບ ລວມທັງສື່ເອເລັກໂຕຣນິກ ຈະດໍາເນີນໄດ້ ກໍຕໍ່ເມື່ອໄດ້ຮັບອະນຸຍາດທາງດ້ານເນື້ອໃນຈາກກະຊວງສາທາລະນະສຸກ ແລະ ກະຊວງອື່ນທີ່ກ່ຽວຂ້ອງ.

## ໝວດທີ 3
## ການດໍາເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ

**ມາດຕາ 48 ການຍື່ນຄໍາຮ້ອງຂໍດໍາເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດໍາເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ ຕ້ອງຍື່ນຄໍາຮ້ອງພ້ອມເອກະສານຄົບຊຸດຕໍ່ຫ້ອງການບໍລິການການລົງທຶນປະຕູດຽວຂັ້ນສູນກາງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

ສໍາລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ດໍາເນີນທຸລະກິດກ່ຽວກັບຢາ, ຜະລິດຕະພັນການແພດ ແລະ ການປິ່ນປົວມາແລ້ວ ທີ່ມີຈຸດປະສົງດໍາເນີນທຸລະກິດກ່ຽວກັບວັກຊີນກັນພະຍາດຕື່ມອີກ ຕ້ອງໄດ້ຂໍອະນຸຍາດເພີ່ມເຕີມທາງດ້ານວິຊາການນໍາ ກະຊວງສາທາລະນະສຸກ.

**ມາດຕາ 49 ການພິຈາລະນາຄໍາຮ້ອງຂໍດໍາເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ**

ພາຍຫຼັງກະຊວງສາທາລະນະສຸກ ໄດ້ຮັບໜັງສືສະເໜີຂໍອະນຸຍາດດໍາເນີນທຸລະກິດ ຈາກຫ້ອງການບໍລິການການລົງທຶນປະຕູດຽວຂັ້ນສູນກາງແລ້ວ ຕ້ອງຄົ້ນຄວ້າ ແລະ ມີຄໍາເຫັນທາງດ້ານວິຊາການ ເປັນລາຍລັກອັກສອນ ສົ່ງໃຫ້ຫ້ອງການບໍລິການການລົງທຶນປະຕູດຽວຂັ້ນສູນກາງ ພາຍໃນເວລາ ແປດວັນ ລັດຖະການ.

**ມາດຕາ 50 ເງື່ອນໄຂໃນການດຳເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ**

ການດຳເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ ມີເງື່ອນໄຂ ດັ່ງນີ້:

1. ໄດ້ຮັບການເຫັນດີທາງດ້ານວິຊາການຈາກກະຊວງສາທາລະນະສຸກ;
2. ມີທຶນພຽງພໍ ໂດຍມີການຢັ້ງຢືນຖານະທາງດ້ານການເງິນຈາກສະຖາບັນການເງິນ ຫຼື ທະນາຄານ;
3. ມີບົດວິພາກ, ແຜນດຳເນີນທຸລະກິດ, ມີສະຖານທີ່, ສຳນັກງານ ຫຼື ສິ່ງປຸກສ້າງ, ວັດຖຸປະກອນ, ພາຫະນະຮັບໃຊ້ ແລະ ສິ່ງອຳນວຍຄວາມສະດວກອັນຈຳເປັນ ທີ່ເໝາະສົມ ແລະ ໄດ້ມາດຕະຖານ;
4. ມີມາດຕະການປົກປັກຮັກສາຄວາມປອດໄພ ແລະ ສິ່ງແວດລ້ອມ;
5. ມີນັກວິຊາການ ທີ່ມີຄວາມຮູ້ດ້ານການແພດ ແຕ່ຊັ້ນສູງ ຫຼື ອະນຸປະລິນຍາ ຂຶ້ນໄປ ແລະ ໄດ້ຜ່ານການຝຶກອົບຮົມກ່ຽວກັບການໃຫ້ວັກຊີນກັນພະຍາດ, ມີບົດຮຽນ ແລະ ປະສົບການກ່ຽວກັບການໃຫ້ວັກຊີນກັນພະຍາດແຕ່ ສາມ ປີ ຂຶ້ນໄປ;
6. ມີຈັນຍາບັນ ດ້ານການແພດ ແລະ ທຸລະກິດ;
7. ມີສຸຂະພາບດີ, ບໍ່ເປັນໂລກຈິດ ຫຼື ພະຍາດຕິດຕໍ່;
8. ບໍ່ເຄີຍຖືກລົງວິໄນດ້ານວິຊາຊີບການໃຫ້ວັກຊີນກັນພະຍາດ;
9. ບໍ່ເຄີຍຖືກລົງໂທດຕັດອິດສະລະພາບໃນສະຖານການກະທຳຜິດໂດຍເຈດຕະນາ.

ສຳລັບໂຮງງານ ຍັງຕ້ອງມີຫ້ອງຜະລິດ, ຫ້ອງວິໄຈ ພ້ອມດ້ວຍ ອຸປະກອນຄົບຊຸດ ຕາມມາດຕະຖານການຜະລິດທີ່ດີ (Good Manufacturing Practice).

**ມາດຕາ 51 ການໂຈະການດຳເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ**

ການດຳເນີນທຸລະກິດ ກ່ຽວກັບການໃຫ້ວັກຊີນກັນພະຍາດ ຈະຖືກໂຈະຕາມການສະເໜີຂອງກະຊວງສາທາລະນະສຸກ ໃນກໍລະນີທີ່ຜູ້ດຳເນີນທຸລະກິດ ໄດ້ລະເມີດລະບຽບການ ກ່ຽວກັບການເກັບຮັກສາວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາວັກຊີນກັນພະຍາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຫາ 19 ຂອງກົດໝາຍສະບັບນີ້ ພາຍຫຼັງໄດ້ມີການແນະນຳ ແລະ ກ່າວເຕືອນສອງຄັ້ງ, ຄັ້ງລະ ສິບຫ້າ ວັນ.

ການໂຈະການດຳເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ ແມ່ນ ການໂຈະການເຄື່ອນໄຫວຊົ່ວຄາວ ໂດຍອົງການທີ່ອະນຸຍາດລົງທຶນ ແລະ ອອກທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 52 ການຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການໃຫ້ວັກຊີນກັນພະຍາດ ຈະຖືກຖອນໃນກໍລະນີທີ່ຜູ້ດຳເນີນທຸລະກິດ ບໍ່ປັບປຸງ ແລະ ແກ້ໄຂ ຕາມເງື່ອນໄຂ ແລະ ກຳນົດເວລາໃນການແຈ້ງໂຈະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້.

**ມາດຕາ 53 ການສະເໜີຕໍ່ການແຈ້ງໃຫ້ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກໃຫ້ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການໃຫ້ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ສາມາດສະເໜີ ຕໍ່ອົງການຂັ້ນເທິງຂອງອົງການທີ່ແຈ້ງໃຫ້ໂຈະ ຫຼື ຖອນ ນັ້ນ ເພື່ອພິຈາລະນາໂດຍພິສູດວ່າ ຕົນໄດ້ປະຕິບັດ

ຕາມເງື່ອນໄຂ, ລະບຽບການ ຢ່າງຖືກຕ້ອງແລ້ວ ພ້ອມທັງມີຂໍ້ມູນຫຼັກຖານ ທາງດ້ານວິທະຍາສາດໃໝ່ ທີ່ຢັ້ງຢືນໄດ້ວ່າການແຈ້ງໃຫ້ ໂຈະ ຫຼື ຖອນ ນັ້ນ ບໍ່ຖືກຕ້ອງຕາມກົດໝາຍ.

## ພາກທີ VI
## ການນຳເຂົ້າ, ການສະໜອງ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ

### ໝວດທີ 1
### ການນຳເຂົ້າ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ

**ມາດຕາ 54 ການນຳເຂົ້າ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ**

ກະຊວງສາທາລະນະສຸກ ຕ້ອງຂຶ້ນແຜນຄວາມຕ້ອງການ ວັກຊີນກັນພະຍາດ ແລະ ອຸປະກອນການໃຫ້ວັກຊີນກັນພະຍາດ ທີ່ນຳມາໃຊ້ ຢູ່ ສປປ ລາວ ໃນແຕ່ລະປີ ໃຫ້ພຽງພໍກັບກຸ່ມເປົ້າໝາຍ ໃນຂອບເຂດທົ່ວປະເທດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດທຸກຊະນິດ ຕ້ອງໄດ້ຂໍອະນຸຍາດ ນຳກະຊວງສາທາລະນະສຸກ.

ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ທີ່ຈະນຳໃຊ້ ໃນ ສປປ ລາວ ຕ້ອງມີ ເລກກຸ່ມຜະລິດ, ວັນ, ເດືອນ, ປີ ຜະລິດ ແລະ ໝົດອາຍຸ ທີ່ໄດ້ຮັບຮອງຈາກອົງການອະນາໄມໂລກ. ສຳລັບວັກຊີນກັນພະຍາດ ຍັງຕ້ອງມີອຸປະກອນຕິດຕາມກ່ອງວັກຊີນ.

ສຳລັບການນຳເຂົ້າວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດຊະນິດໃໝ່ ທີ່ບໍ່ເຄີຍນຳໃຊ້ມາກ່ອນ ໃນ ສປປ ລາວ ນັ້ນ ຕ້ອງໄດ້ຮັບການຮັບຮອງ ຈາກກະຊວງສາທາລະນະສຸກ ຕາມການສະເໜີຂອງ ຄະນະກຳມະການທີ່ປຶກສາແຫ່ງຊາດສຳລັບວຽກງານໃຫ້ວັກຊີນກັນພະຍາດ ແລະ ໄດ້ຮັບການຢັ້ງຢືນຄຸນນະພາບຈາກອົງການອະນາໄມໂລກ ຈຶ່ງນຳໃຊ້ໄດ້.

ລະບຽບການນຳເຂົ້າ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ.

**ມາດຕາ 55 ຂັ້ນຕອນການນຳເຂົ້າວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ**

ການນຳເຂົ້າວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການກະກຽມເອກະສານ;

2. ການຮັບເອົາວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ຢູ່ດ່ານສາກົນ.

**ມາດຕາ 56 ການກະກຽມເອກະສານ**

ການກະກຽມເອກະສານ ແມ່ນ ການປະກອບ ແລະ ກຽມພ້ອມບັນດາເອກະສານທີ່ຈຳເປັນ ສຳລັບການນຳເຂົ້າວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ເປັນຕົ້ນ ໜັງສືຂໍອະນຸຍາດການນຳເຂົ້າວັກຊີນກັນພະຍາດ, ໜັງສືຂໍອະນຸຍາດ ຍົກເວັ້ນ ພາສີ, ອາກອນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ຕ້ອງກະກຽມເອກະສານໃຫ້ຄົບຖ້ວນ ດັ່ງນີ້:

1. ໃບຢັ້ງຢືນການນຳເຂົ້າ;
2. ໃບແຈ້ງສາງຊົ່ວຄາວ;
3. ແບບພິມ ບ M8;
4. ໃບຢັ້ງຢືນຄ້ຳປະກັນການນຳເຂົ້າເຄື່ອງປະຈຳດ່ານ;
5. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 57 ການຮັບເອົາວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ຢູ່ດ່ານສາກົນ**

ການຮັບເອົາວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ຢູ່ດ່ານສາກົນ ພະນັກງານທີ່ກ່ຽວຂ້ອງທີ່ໄດ້ຮັບການມອບໝາຍ ຕ້ອງກວດກາບັນດາເອກະສານຢັ້ງຢືນການນຳເຂົ້າ ໃຫ້ຖືກຕ້ອງ, ຄົບຖ້ວນ ເປັນຕົ້ນ ຈຳນວນວັກຊີນ, ສະຫຼາກ, ວັນ, ເດືອນ, ປີ ຜະລິດ ແລະ ວັນໝົດອາຍຸ, ສະພາບການຫຸ້ມຫໍ່ ແລະ ສຸ່ມກວດອ່ານອຸປະກອນຕິດຕາມອຸນຫະພູມ ທີ່ຕິດໃນຫີບວັກຊີນກັນພະຍາດ, ຖ້າພົບເຫັນມີສິ່ງບໍ່ຖືກຕ້ອງຕາມເງື່ອນໄຂໃຫ້ປະຕິເສດການຮັບເອົາວັກຊີນນັ້ນ, ພ້ອມທັງແຈ້ງຜົນການສຸ່ມກວດໃຫ້ພາກສ່ວນຮັບຜິດຊອບຮັບຊາບ ແລະ ທົດແທນຄ່າເສຍຫາຍທັງໝົດທີ່ເກີດຂຶ້ນ.

ພາຍຫຼັງກວດກາຖືກຕ້ອງແລ້ວ ຕ້ອງເຄື່ອນຍ້າຍອອກພາຍໃນ ສອງ ຊົ່ວໂມງ ໃນກໍລະນີການອະນຸມັດເອກະສານຢູ່ດ່ານສາກົນຊັກຊ້າເກີນ ສອງຊົ່ວໂມງ ໃຫ້ອະນຸຍາດນຳເອົາວັກຊີນກັນພະຍາດອອກຈາກສາງດ່ານສາກົນກ່ອນ, ຈາກນັ້ນຈຶ່ງດຳເນີນຂັ້ນຕອນເອກະສານ ຕາມພາຍຫຼັງ ເພື່ອຮັບປະກັນຄຸນນະພາບຂອງວັກຊີນ.

## ໝວດທີ 2
## ການສະໜອງ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ

**ມາດຕາ 58 ການສະໜອງ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ**

ລັດ ເປັນຜູ້ສະໜອງວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ໃຫ້ພຽງພໍກັບຄວາມຕ້ອງການ ຂອງກຸ່ມເປົ້າໝາຍ ໃນຂອບເຂດທົ່ວປະເທດຢ່າງທັນການ.

ລັດ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ການຮ່ວມມື, ປະກອບສ່ວນຊ່ວຍເຫຼືອໃນການສະໜອງ ວັກຊີນກັນພະຍາດ, ອຸປະກອນການໃຫ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ.

ມາດຕາ 59 ການກະກຽມ ແລະ ນຳສົ່ງ ວັກຊີນກັນພະຍາດ, ອຸປະກອນການໃຊ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ

ໃນການກະກຽມ ຕ້ອງປະກອບບັນດາເອກະສານ ແລະ ສິ່ງຫຸ້ມຫໍ່ ພ້ອມທັງແນະນຳວິທີການຂົນສົ່ງ ກ່ອນນຳສົ່ງ ວັກຊີນກັນພະຍາດ, ອຸປະກອນການໃຊ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ໄປ ເຖິງເປົ້າໝາຍ ເພື່ອຮັບປະກັນບໍ່ໃຫ້ ເປ່ເພ, ເສຍຫາຍ ຫຼື ເສື່ອມຄຸນນະພາບ.

ໃນການນຳສົ່ງ ວັກຊີນກັນພະຍາດ, ອຸປະກອນການໃຊ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນ ພະຍາດ ຕ້ອງຮັບປະກັນໃຫ້ມີຄວາມປອດໄພ ແລະ ໃຫ້ຢູ່ໃນເງື່ອນໄຂທີ່ຄົບຖ້ວນ ເມື່ອໄປເຖິງໜ່ວຍບໍລິການ ແລະ ກຸ່ມເປົ້າໝາຍ.

ການນຳສົ່ງ ຈາກສູນກາງ ຫາ ພາກ ແລະ ຂັ້ນແຂວງ ໃຫ້ປະຕິບັດໃນທຸກ ສອງ ເດືອນ; ແຕ່ແຂວງ ຫາ ຂັ້ນ ເມືອງ, ແຕ່ຂັ້ນເມືອງ ຫາ ສຸກສາລາ ໃຫ້ປະຕິບັດ ໜຶ່ງຄັ້ງ ຕໍ່ເດືອນ; ສຳລັບການສະໜອງໃຫ້ໜ່ວຍບໍລິການທີ່ຂຶ້ນ ກັບໂຮງໝໍ ໃຫ້ປະຕິບັດ ໜຶ່ງຄັ້ງ ຕໍ່ເດືອນ.

ໃນກໍລະນີເກີດໄພພິບັດ ຫຼື ການລະບາດຂອງພະຍາດ ໃນເຂດໃດໜຶ່ງ ຊຶ່ງມີຄວາມຈຳເປັນ ຕ້ອງສະໜອງ ວັກຊີນກັນພະຍາດ, ອຸປະກອນການໃຊ້ ແລະ ອຸປະກອນການເກັບຮັກສາ ວັກຊີນກັນພະຍາດ ໃຫ້ເຂດດັ່ງກ່າວ ຢ່າງພຽງພໍ ແລະ ທັນການ.

## ພາກທີ VII
## ຂໍ້ຫ້າມ

ມາດຕາ 60 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ຂັດຂວາງ ຫຼື ເມີນເສີຍ ຕໍ່ການເຄື່ອນໄຫວໃຫ້ວັກຊີນກັນພະຍາດ ຂອງພະນັກງານສາທາລະນະສຸກ ທີ່ກ່ຽວຂ້ອງ;

2. ໃຊ້ ຫຼື ເປັນສື່ກາງໃນການໃຊ້ ແລະ ຮັບສິນບົນ;

3. ບິດເບືອນ, ໂຄສະນາ ເຜີຍແຜ່ ສ້າງຄວາມເສື່ອມເສຍ ຕໍ່ການໃຫ້ວັກຊີນກັນພະຍາດ;

4. ປະຕິເສດການຮັບວັກຊີນກັນພະຍາດ, ການເບິ່ງແຍງດູແລ, ຄຳແນະນຳ ຫຼື ການຊ່ວຍເຫຼືອຂອງ ແພດ, ໝໍ, ຄອບຄົວ ຫຼື ບຸກຄົນອື່ນ;

5. ຈຳແນກ, ລັງກຽດ, ໝິ່ນປະໝາດ ຫຼື ໃສ່ຮ້າຍປ້າຍສີ ຜູ້ໃຫ້ບໍລິການ ຫຼື ຜູ້ຮັບບໍລິການ ວັກຊີນກັນ ພະຍາດ;

6. ບິດເບືອນ, ຊຸກເຊື່ອງ, ເຊື່ອງອຳ, ປິດບັງ ຂໍ້ມູນກ່ຽວກັບການໃຊ້ ແລະ ຮັບ ວັກຊີນກັນພະຍາດ;

7. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ.

ມາດຕາ 61 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ໃຫ້ວັກຊີນກັນພະຍາດ

ຫ້າມພະນັກງານ-ລັດຖະກອນ ໃຫ້ວັກຊີນກັນພະຍາດ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ໜ້າທີ່ ຫຼື ຕຳແໜ່ງ ເພື່ອບັງຄັບ, ນາບຂູ່, ກົດໜ່ວງ ຖ່ວງດຶງ ຫຼື ຮຽກຮ້ອງເອົາສິນ ບົນ;

2. ປອມແປງ ຫຼື ອອກເອກະສານ ໂດຍບໍ່ຖືກຕ້ອງ;

3. ນຳໃຊ້ວັກຊີນກັນພະຍາດ ຫຼື ອຸປະກອນການໃຫ້ວັກຊີນກັນພະຍາດ ທີ່ບໍ່ມີຄຸນະພາບ ຫຼື ບໍ່ໄດ້ມາດຕະຖານ ເປັນຕົ້ນ ໝົດອາຍຸການນຳໃຊ້, ເສຍຄຸນ, ວັກຊີນກັນພະຍາດຊະນິດທີ່ປະສົມນ້ຳລະລາຍ ເກີນທີກ ຊົ່ວໂມງ, ເຂັມແຊງທົ່ວໄປ ທີ່ບໍ່ໄດ້ນຳໃຊ້ເຂົ້າໃນການໃຫ້ວັກຊີນກັນພະຍາດ;

4. ປະຕິບັດໜ້າທີ່ ດ້ວຍຄວາມປະໝາດ, ເລິ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ ຫຼື ຂາດຈັນຍາບັນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ຕໍ່ບຸກຄົນອື່ນ;

5. ຮຽກ ຫຼື ທວງ ເອົາ ຄ່າທຳນຽມ, ຄ່າບໍລິການ ຫຼື ນຳໃຊ້ລາຍຮັບວິຊາການ ໂດຍບໍ່ຖືກຕ້ອງ ຕາມກົດໝາຍ ຫຼື ລະບຽບການ;

6. ຈຳແນກ, ລັງກຽດ, ໝິ່ນປະໝາດ ຫຼື ໃສ່ຮ້າຍປ້າຍສີ ຜູ້ຮັບບໍລິການ ຫຼື ຜູ້ໃຫ້ບໍລິການ ວັກຊີນກັນພະຍາດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VIII
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 62 ຮູບການແກ້ໄຂຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງ ກ່ຽວກັບການໃຫ້ວັກຊີນກັນພະຍາດ ສາມາດແກ້ໄຂດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ ຫຼື ການໄກ່ເກ່ຍ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຕັດສິນຂອງສານປະຊາຊົນ;
5. ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ.

### ມາດຕາ 63 ການປະນີປະນອມ ຫຼື ການໄກ່ເກ່ຍ

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບການໃຫ້ວັກຊີນກັນພະຍາດ, ຄູ່ກໍລະນີ ສາມາດປຶກສາຫາລື, ເຈລະຈາ, ປະນີປະນອມ ຫຼື ໄກ່ເກ່ຍກັນ.

### ມາດຕາ 64 ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບການໃຫ້ວັກຊີນກັນພະຍາດ, ຄູ່ກໍລະນີ ສາມາດສະເໜີຕໍ່ຂະແໜງການສາທາລະນະສຸກ ຫຼື ຂະແໜງການອື່ນ ທີ່ກ່ຽວຂ້ອງພິຈາລະນາແກ້ໄຂຕາມກົດໝາຍ.

ຂະແໜງການສາທາລະນະສຸກ ຕ້ອງແກ້ໄຂຂໍ້ສະເໜີດັ່ງກ່າວ ພາຍໃນເວລາ ສາມສິບ ວັນ. ຖ້າບໍ່ສາມາດແກ້ໄຂໄດ້ພາຍໃນເວລາດັ່ງກ່າວ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຄູ່ກໍລະນີຮັບຊາບ.

### ມາດຕາ 65 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ໃນກໍລະນີເກີດມີຂໍ້ຂັດແຍ່ງ ໃນການດຳເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ, ຄູ່ກໍລະນີ ມີສິດສະເໜີ ຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 66 ການຕັດສິນຂອງສານປະຊາຊົນ**

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບວຽກງານໃຫ້ວັກຊີນກັນພະຍາດ, ຄູ່ກໍລະນີຝ່າຍໃດໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ.

**ມາດຕາ 67 ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ**

ໃນກໍລະນີເກີດມີຂໍ້ຂັດແຍ່ງກ່ຽວກັບການໃຫ້ວັກຊີນກັນພະຍາດ ທີ່ມີລັກສະນະສາກົນ, ຄູ່ກໍລະນີ ສາມາດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງ ພາຍໃນ, ຕ່າງປະເທດ ຫຼື ສາກົນ ຕາມການຕົກລົງກັນ ຫຼື ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ IX
## ຄະນະກຳມະການ ກ່ຽວກັບການໃຫ້ວັກຊີນກັນພະຍາດ

**ມາດຕາ 68 ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດ**

ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດ ແມ່ນ ການຈັດຕັ້ງທີ່ບໍ່ປະຈຳການ ໂດຍແມ່ນຄະນະດຽວກັນກັບ ຄະນະກຳມະການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ.

ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດ ມີ ສີ່ ລະດັບ ຄື ລະດັບຊາດ, ລະດັບແຂວງ, ລະດັບເມືອງ ແລະ ລະດັບບ້ານ. ສຳລັບການຈັດຕັ້ງ ຂອງຄະນະກຳມະການໃຫ້ວັກຊີນກັນພະຍາດ ລະດັບຊາດ, ລະດັບແຂວງ ແລະ ລະດັບເມືອງ ແມ່ນການຈັດຕັ້ງດຽວກັນກັບຄະນະກຳມະການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ ແຕ່ລະຂັ້ນ. ສ່ວນລະດັບບ້ານໃຫ້ຖືເອົາຄະນະກຳມະການຮັກສາສຸຂະພາບຂັ້ນບ້ານເປັນຜູ້ຮັບຜິດຊອບ.

ນອກຈາກນີ້ ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດ ຍັງມີ:

1. ຄະນະກຳມະການທີ່ປຶກສາແຫ່ງຊາດ ສຳລັບການໃຫ້ວັກຊີນກັນພະຍາດ;
2. ຄະນະກຳມະການກວດກາເຫດການປະຕິກິລິຍາທີ່ກ່ຽວພັນກັບການນຳໃຊ້ຢາ, ວັກຊີນກັນພະຍາດ ແລະ ຜະລິດຕະພັນທາງການແພດອື່ນ.

**ມາດຕາ 69 ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບຊາດ**

ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບຊາດ ມີພາລະບົດບາດ ສິດ ແລະ ໜ້າທີ່ໃນການຊີ້ນຳ, ຕິດຕາມ, ກວດກາ, ຊຸກຍູ້ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງເຂົ້າຮ່ວມ ແລະ ຈັດຕັ້ງປະຕິບັດການໃຫ້ວັກຊີນກັນພະຍາດ ໃນຂອບເຂດທົ່ວປະເທດ.

**ມາດຕາ 70 ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບແຂວງ**

ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບແຂວງ ມີພາລະບົດບາດ, ສິດ ແລະ ໜ້າທີ່ເຂົ້າຮ່ວມຈັດຕັ້ງປະຕິບັດ, ຈັດຕັ້ງຜັນຂະຫຍາຍ ຍຸດທະສາດ, ແຜນງານ, ໂຄງການ ແລະ ກິດຈະກຳ ລວມທັງການໂຄສະນາ ເຜີຍແຜ່, ຂົນຂວາຍ, ຊອກຫາທຶນ ແລະ ເຕັກນິກວິຊາການ ກ່ຽວກັບການໃຫ້ວັກຊີນກັນພະຍາດ.

**ມາດຕາ 71 ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບເມືອງ**

ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບເມືອງ ມີພາລະບົດບາດ, ສິດ ແລະ ໜ້າທີ່ ເຂົ້າຮ່ວມຈັດຕັ້ງປະຕິບັດ, ຈັດຕັ້ງຜັນຂະຫຍາຍ ຍຸດທະສາດ, ແຜນງານ, ໂຄງການ ແລະ ກິດຈະກຳ ລວມທັງ ການໂຄສະນາ ເຜີຍແຜ່, ຂົນຂວາຍ, ຊອກຫາທຶນ ແລະ ເຕັກນິກວິຊາການ ກ່ຽວກັບການໃຫ້ວັກຊີນກັນພະຍາດ.

**ມາດຕາ 72 ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບບ້ານ**

ຄະນະກຳມະການ ກ່ຽວກັບການໃຫ້ວັກຊີນກັນພະຍາດລະດັບບ້ານ ມີພາລະບົດບາດ, ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 80 ຂອງກົດໝາຍສະບັບນີ້.

**ມາດຕາ 73 ຄະນະກຳມະການທີ່ປຶກສາແຫ່ງຊາດ ສຳລັບການໃຫ້ວັກຊີນກັນພະຍາດ**

ຄະນະກຳມະການທີ່ປຶກສາແຫ່ງຊາດ ສຳລັບການໃຫ້ວັກຊີນກັນພະຍາດ ແມ່ນ ການຈັດຕັ້ງຂອງລັດທີ່ບໍ່ປະຈຳການ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍ ລັດຖະມົນຕີກະຊວງສາທາລະນະສຸກ, ມີພາລະບົດບາດໃນການຄົ້ນຄວ້າ ແລະ ໃຫ້ຄຳປຶກສາດ້ານວິຊາການ ກ່ຽວກັບການໃຫ້ວັກຊີນກັນພະຍາດ.

ໂຄງປະກອບການຈັດຕັ້ງ, ການເຄື່ອນໄຫວ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການທີ່ປຶກສາແຫ່ງຊາດ ສຳລັບການໃຫ້ວັກຊີນກັນພະຍາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 74 ຄະນະກຳມະການກວດກາເຫດການປະຕິປັກ ທີ່ກ່ຽວພັນກັບການນຳໃຊ້ຢາ, ວັກຊີນກັນພະຍາດ ແລະ ຜະລິດຕະພັນທາງການແພດອື່ນ**

ຄະນະກຳມະການກວດກາເຫດການປະຕິປັກ ທີ່ກ່ຽວພັນກັບການນຳໃຊ້ຢາ, ວັກຊີນກັນພະຍາດ ແລະ ຜະລິດຕະພັນທາງການແພດອື່ນ ແມ່ນ ການຈັດຕັ້ງຂອງລັດທີ່ບໍ່ປະຈຳການ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍລັດຖະມົນຕີກະຊວງສາທາລະນະສຸກ ມີພາລະບົດບາດໃນການຕິດຕາມ, ກວດກາ, ສືບຄົ້ນຫາສາເຫດ, ວິເຄາະ, ວິໄຈ ເພື່ອບົ່ງມະຕິ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ ເພື່ອນຳໃຊ້ມາດຕະການແກ້ໄຂຢ່າງທັນການ.

ໂຄງປະກອບການຈັດຕັ້ງ, ການເຄື່ອນໄຫວ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດກາເຫດການປະຕິປັກ ທີ່ກ່ຽວພັນກັບການນຳໃຊ້ຢາ, ວັກຊີນກັນພະຍາດ ແລະ ຜະລິດຕະພັນທາງການແພດອື່ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ X
# ການຄຸ້ມຄອງ ແລະ ກວດກາການໃຊ້ວັກຊີນກັນພະຍາດ
## ໝວດທີ 1
## ການຄຸ້ມຄອງການໃຊ້ວັກຊີນກັນພະຍາດ

**ມາດຕາ 75 ອົງການຄຸ້ມຄອງ**

ລັດຖະບານ ເປັນຜູ້ຄຸ້ມຄອງການໃຊ້ວັກຊີນກັນພະຍາດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງສາທາລະນະສຸກ ເປັນເຈົ້າການ ແລະ ຮັບຜິດຊອບໂດຍກົງ ໃນການປະສານສົມທົບ ກັບບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງການໃຊ້ວັກຊີນກັນພະຍາດ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ;
3. ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ;
4. ສຸກສາລາ;
5. ຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ.

**ມາດຕາ 76 ສິດ ແລະ ໜ້າທີ່ ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງການໃຊ້ວັກຊີນກັນພະຍາດ ກະຊວງສາທາລະນະສຸກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ຫຼື ປັບປຸງ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການໃຊ້ວັກຊີນກັນພະຍາດ ເພື່ອນຳສະເໜີ ລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການໃຊ້ວັກຊີນກັນພະຍາດ ໃຫ້ເປັນ ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ອັນລະອຽດ ແລະ ຈັດຕັ້ງປະຕິບັດ;

3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການໃຊ້ວັກຊີນກັນພະຍາດ;

4. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນງານ, ແຜນ ການ ແລະໂຄງການ ກ່ຽວກັບການໃຊ້ວັກຊີນກັນພະຍາດ;

5. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ກ່ຽວກັບການໃຊ້ວັກຊີນກັນພະຍາດຕາມສາຍຕັ້ງຂອງຕົນໃນຂອບເຂດທົ່ວປະເທດ;

6. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບການໃຊ້ວັກຊີນກັນພະຍາດ;

7. ແຕ່ງຕັ້ງຄະນະກຳມະການ ກວດກາສາເຫດການເກີດກໍລະນີເຫດການປະຕິກິລິຍາ ຫຼັງການໃຊ້ວັກຊີນກັນພະຍາດ ໂດຍມີການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ;

8. ສ້າງ, ພັດທະນາ ແລະ ຄຸ້ມຄອງ ສະຖານທີ່ເກັບຮັກສາວັກຊີນກັນພະຍາດ ເປັນຕົ້ນ ສາງ, ຫ້ອງເຢັນ, ຫ້ອງແຊ່ແຂງ;

9. ສ້າງ ແລະ ອອກ ຄຳແນະນຳ, ຄູ່ມື ແລະ ຂັ້ນຕອນປະຕິບັດການໃຊ້ວັກຊີນກັນພະຍາດ;

10. ກຳນົດບັນຊີພະຍາດທີ່ສາມາດກັນໄດ້ດ້ວຍວັກຊີນກັນພະຍາດ;

11. ກຳນົດບັນຊີຊະນິດຂອງວັກຊີນກັນພະຍາດທີ່ນຳໃຊ້ ຢູ່ ສປປ ລາວ ໃນແຕ່ລະໄລຍະ;

12. ສ້າງ, ປັບປຸງ ແລະ ຂະຫຍາຍ ຕາໜ່າງການໃຫ້ບໍລິການວັກຊີນກັນພະຍາດ ແລະ ລະບົບຖານຂໍ້ມູນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

13. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການໃຫ້ວັກຊີນກັນພະຍາດຕົນອອກ ແລະ ຂອງຂັ້ນລຸ່ມ ທີ່ຂັດກັບກົດໝາຍ;

14. ສະເໜີ ພາກສ່ວນທີ່ກ່ຽວຂ້ອງ ອອກຄຳສັ່ງ ໂຈະ ຫຼື ຍົກເລີກ ການດຳເນີນທຸລະກິດທີ່ບໍ່ຖືກຕ້ອງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

15. ອອກໃບຢັ້ງຢືນ ກ່ຽວກັບການປະກອບວິຊາຊີບ ແລະ ການປະຕິບັດວຽກງານຕົວຈິງ ໃນການໃຫ້ວັກຊີນກັນພະຍາດ;

16. ຮັບ ແລະ ພິຈາລະນາ ແກ້ໄຂ ຄຳສະເໜີ, ຄຳຮ້ອງ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

17. ອອກ, ໂຈະ, ຖອນ ໃບອະນຸຍາດດ້ານວິຊາການ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

18. ປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

19. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

20. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດການໃຫ້ວັກຊີນກັນພະຍາດ ໃຫ້ລັດຖະບານຢ່າງເປັນປົກກະຕິ;

21. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 77 ສິດ ແລະ ໜ້າທີ່ ຂອງພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງການໃຫ້ວັກຊີນກັນພະຍາດ ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງ, ປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການກ່ຽວກັບການໃຫ້ວັກຊີນກັນພະຍາດ;

4. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດການໃຫ້ວັກຊີນກັນພະຍາດ;

5. ສົ່ງເສີມ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

6. ພັດທະນາ ແລະ ຄຸ້ມຄອງ ສະຖານທີ່ເກັບຮັກສາວັກຊີນກັນພະຍາດ ເປັນຕົ້ນ ສາງ, ຫ້ອງເປັນ, ຫ້ອງແຊ່ແຂງ;

7. ເກັບກຳ, ວິເຄາະ ຂໍ້ມູນ ແລະ ວິເຄາະຄວາມສ່ຽງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

8. ກຳນົດກຸ່ມເປົ້າໝາຍ ແລະ ເຂດບໍລິການໃຫ້ວັກຊີນກັນພະຍາດ;

9. ປະຕິບັດ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງຂັ້ນເທິງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

10. ສ້າງ, ປັບປຸງ ແລະ ຂະຫຍາຍ ຕາໜ່າງລະບົບຖານຂໍ້ມູນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

11. ໂຈະ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ທີ່ບໍ່ຖືກຕ້ອງຂອງຂັ້ນເມືອງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

12. ສະເໜີ ຂັ້ນເທິງ ອອກຄຳສັ່ງ ໂຈະ ຫຼື ຍົກເລີກ ການດຳເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດທີ່ບໍ່ຖືກຕ້ອງ;

13. ຮັບ ແລະ ພິຈາລະນາ ແກ້ໄຂ ຄຳສະເໜີ, ຄຳຮ້ອງ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

14. ປະສານສົມທົບກັບ ພະແນກການ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ແລະ ພາກສ່ວນອື່ນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບການໃຫ້ວັກຊີນກັນພະຍາດ ຕາມການມອບໝາຍ;

16. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດການໃຫ້ວັກຊີນກັນພະຍາດ ໃຫ້ກະຊວງສາທາລະນະສຸກ, ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 78 ສິດ ແລະ ໜ້າທີ່ ຂອງຫ້ອງການ ສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງການໃຫ້ວັກຊີນກັນພະຍາດ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

4. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດການໃຫ້ວັກຊີນກັນພະຍາດ;

5. ສະເໜີ ບຳລຸງ, ຍົກລະດັບ ບຸກຄະລາກອນ ດ້ານການໃຫ້ວັກຊີນກັນພະຍາດ;

6. ເກັບກຳ, ວິເຄາະ ຂໍ້ມູນ ແລະ ວິເຄາະຄວາມສ່ຽງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

7. ກຳນົດກຸ່ມເປົ້າໝາຍ ແລະ ເຂດບໍລິການ ໃຫ້ວັກຊີນກັນພະຍາດ;

8. ຄຸ້ມຄອງ ແລະ ນຳໃຊ້ ລະບົບຖານຂໍ້ມູນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

9. ສະເໜີ ຂັ້ນເທິງພິຈາລະນາ ອອກ, ໂຈະ, ຖອນ ໃບອະນຸຍາດທາງດ້ານວິຊາການ ໃນການດຳເນີນທຸລະກິດກ່ຽວກັບການໃຫ້ວັກຊີນກັນພະຍາດ ທີ່ບໍ່ຖືກຕ້ອງ;

10. ຮັບ ແລະ ພິຈາລະນາ ແກ້ໄຂ ຄຳສະເໜີ, ຄຳຮ້ອງ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

11. ປະສານສົມທົບກັບຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນກ່ຽວກັບການໃຫ້ວັກຊີນກັນພະຍາດ;

12. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດການໃຫ້ວັກຊີນກັນພະຍາດ ໃຫ້ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ, ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 79 ສິດ ແລະ ໜ້າທີ່ ຂອງສຸກສາລາ**

ໃນການຄຸ້ມຄອງການໃຫ້ວັກຊີນກັນພະຍາດ ສຸກສາລາ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນເຈົ້າການ ແລະ ເຂົ້າຮ່ວມການໃຫ້ວັກຊີນກັນພະຍາດ;

2. ເຜີຍແຜ່ຂໍ້ມູນ ຂ່າວສານ ກ່ຽວກັບການໃຫ້ວັກຊີນກັນພະຍາດ ໃຫ້ປະຊາຊົນເຂົ້າໃຈ ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດ;

3. ສ້າງແຜນຈຸລະພາກ ດ້ວຍການມີສ່ວນຮ່ວມຂອງຊຸມຊົນ ເພື່ອເຂົ້າເຖິງກຸ່ມເປົ້າໝາຍ;

4. ເກັບກຳຂໍ້ມູນເບື້ອງຕົ້ນ ກ່ຽວກັບກຸ່ມເປົ້າໝາຍ, ຜູ້ພາດໂອກາດ ໃນການຮັບວັກຊີນກັນພະຍາດ ແລ້ວລາຍງານໃຫ້ ຫ້ອງການສາທາລະນະສຸກຂັ້ນເມືອງ ແລະ ອົງການປົກຄອງບ້ານ;

5. ຕິດຕາມ, ກວດກາ, ປະເມີນຜົນ ແລະ ລາຍງານ ສະພາບການ ການໃຫ້ວັກຊີນກັນພະຍາດ;

6. ເຂົ້າຮ່ວມ ໃນການໄກ່ເກ່ຍ ບັນຫາຢູ່ບ້ານ ກ່ຽວກັບການໃຫ້ວັກຊີນກັນພະຍາດ;

7. ເຂົ້າຮ່ວມ ການຝຶກອົບຮົມ, ຍົກລະດັບ ທາງດ້ານວິຊາການກ່ຽວກັບການ ໃຫ້ວັກຊີນກັນພະຍາດ;

8. ຮັບ ຄຳສະເໜີ, ຄຳຮ້ອງ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການ ໃຫ້ວັກຊີນກັນພະຍາດ;

9. ບັນທຶກ, ເກັບກຳ ແລະ ວິເຄາະ ຂໍ້ມູນໃນພື້ນທີ່ໃດໜຶ່ງ;

10. ສະຫຼຸບ, ລາຍງານຜົນ ຂອງການຈັດຕັ້ງປະຕິບັດ ການໃຫ້ວັກຊີນກັນພະຍາດໃຫ້ອົງການປົກຄອງບ້ານ ແລະ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 80 ສິດ ແລະ ໜ້າທີ່ ຂອງຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ**

ໃນການຄຸ້ມຄອງການໃຫ້ວັກຊີນກັນພະຍາດ ຄະນະກຳມະການຮັກສາສຸຂະພາບຂັ້ນບ້ານ ມີ ສິດ ແລະ ໜ້າທີ່ ໃນຂອບເຂດບ້ານຂອງຕົນ ດັ່ງນີ້:

1. ປຸກລະດົມ, ຂົນຂວາຍ, ສຶກສາອົບຮົມ ແລະ ເປັນຜູ້ນຳພາ ຄອບຄົວ, ພໍ່ແມ່ປະຊາຊົນ ເຂົ້າຮ່ວມການຈັດຕັ້ງປະຕິບັດ ແລະ ຮັບການບໍລິການ ວັກຊີນກັນພະຍາດ;

2. ໂຄສະນາ, ເຜີຍແຜ່ ຂໍ້ມູນ ຂ່າວສານ ກ່ຽວກັບການໃຫ້ວັກຊີນກັນພະຍາດໃຫ້ປະຊາຊົນ;

3. ເກັບກຳຂໍ້ມູນເບື້ອງຕົ້ນ ກ່ຽວກັບການໃຫ້ວັກຊີນກັນພະຍາດ ເປັນຕົ້ນ ກຸ່ມເປົ້າໝາຍ, ຜູ້ພາດໂອກາດໃນການຮັບວັກຊີນກັນພະຍາດ ແລ້ວລາຍງານໃຫ້ ບ້ານ ແລະ ສຸກສາລາ;

4. ກະກຽມສະຖານທີ່ໃຫ້ການບໍລິການວັກຊີນກັນພະຍາດ;

5. ເຂົ້າຮ່ວມ ແລະ ໃຫ້ການຊ່ວຍເຫຼືອ ແພດເຄື່ອນທີ່ ໃນການຈັດຕັ້ງປະຕິບັດການໃຫ້ວັກຊີນກັນພະຍາດ;

6. ເຂົ້າຮ່ວມການຝຶກອົບຮົມ, ຍົກລະດັບທາງດ້ານວິຊາການ ໃນການໃຫ້ວັກຊີນກັນພະຍາດ;

7. ນຳໃຊ້ສິດ ແລະ ປະຕິບັດ ໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 81 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບ ຂະແໜງການສາທາລະນະສຸກ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ ການສ້າງແຜນ, ຈັດແບ່ງງົບປະມານ, ລົງທຶນ, ກໍ່ສ້າງໂຄງລ່າງພື້ນຖານ, ປົກປັກຮັກສາສະຖານທີ່ບໍລິການ, ວັດຖຸປະກອນ, ຊ່ວຍເຫຼືອ, ອຳນວຍຄວາມສະດວກ ພ້ອມທັງ ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ປະກອບສ່ວນເຂົ້າໃນການໃຫ້ວັກຊີນກັນພະຍາດ.

## ໝວດທີ 2
## ການກວດກາການໃຫ້ວັກຊີນກັນພະຍາດ

**ມາດຕາ 82 ອົງການກວດກາ**

ອົງການກວດກາການໃຫ້ວັກຊີນກັນພະຍາດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 68 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດແຕ່ລະຂັ້ນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 83 ເນື້ອໃນການກວດກາ**

ການກວດກາ ວຽກງານໃຫ້ວັກຊີນກັນພະຍາດ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍວ່າດ້ວຍການໃຫ້ວັກຊີນກັນພະຍາດ;
2. ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
3. ການເຄື່ອນໄຫວວຽກງານ ແລະ ການດຳເນີນທຸລະກິດ ກ່ຽວກັບການໃຫ້ວັກຊີນກັນພະຍາດ;
4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບການໃຫ້ວັກຊີນກັນພະຍາດ.

**ມາດຕາ 84 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບຮີບດ່ວນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາ ຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍ ທີ່ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບຮີບດ່ວນ ແມ່ນ ການກວດກາ ໂດຍບໍ່ໄດ້ແຈ້ງ ໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ XI
## ງົບປະມານ, ເຄື່ອງແບບ, ເຄື່ອງໝາຍ, ຕາປະທັບ ແລະ ສັບປະດາໃຫ້ວັກຊີນກັນພະຍາດແຫ່ງຊາດ

**ມາດຕາ 85 ງົບປະມານ**

ງົບປະມານທີ່ນຳໃຊ້ເຂົ້າໃນວຽກງານໃຫ້ວັກຊີນກັນພະຍາດ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ການຊ່ວຍເຫຼືອຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
3. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 86 ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ**

ຄະນະກຳມະການກ່ຽວກັບການໃຫ້ວັກຊີນກັນພະຍາດມີ ເຄື່ອງແບບ, ເຄື່ອງໝາຍ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ໂດຍກະຊວງສາທາລະນະສຸກ ເປັນຜູ້ກຳນົດ.

**ມາດຕາ 87 ສັບປະດາໃຫ້ວັກຊີນກັນພະຍາດແຫ່ງຊາດ**

ລັດ ກຳນົດເອົາສັບປະດາທີໜຶ່ງ ຂອງເດືອນ ເມສາ ຂອງທຸກປີ ເປັນສັບປະດາໃນການໃຫ້ວັກຊີນກັນພະຍາດແຫ່ງຊາດ.

## ພາກທີ XII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 88 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລວມທັງອົງການປົກຄອງທ້ອງຖິ່ນ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການເປັນແບບຢ່າງໃນການໃຫ້ວັກຊີນກັນພະຍາດ, ປະກອບສ່ວນດ້ານທຶນຮອນ, ເຫື່ອແຮງ, ສະຕິປັນຍາເຂົ້າໃນການໃຫ້ວັກຊີນກັນພະຍາດ ແລະ ສາມາດບັນລຸຕາມຄາດໝາຍ ເກົ້າສິບຫ້າ ສ່ວນຮ້ອຍ ຂຶ້ນໄປ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 89 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

**ມາດຕາ 90 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ການແນະນຳຂອງແພດ, ຈຳແນກ, ລັງກຽດ ຫຼື ໝິ່ນປະໝາດ ຜູ້ໃຫ້ວັກຊີນກັນພະຍາດ ຫຼື ຜູ້ຮັບວັກຊີນກັນພະຍາດ, ບໍ່ໃຫ້ຄວາມຮ່ວມມືໃນການໃຫ້ວັກຊີນກັນພະຍາດ ຈະຖືກສຶກສາອົບຮົມ, ກ່າວເຕືອນ.

**ມາດຕາ 91 ມາດຕະການທາງວິໄນ**

ພະນັກງານ-ລັດຖະກອນ ແລະ ຜູ້ປະກອບວິຊາຊີບການໃຫ້ວັກຊີນກັນພະຍາດ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ແລະ ບັນທຶກໄວ້ໃນສຳນວນ ເອກະສານຊີວະປະຫວັດ ຂອງຜູ້ກ່ຽວ;
2. ໂຈະ ການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນທີ່ຕ່ຳກວ່າເກົ່າ;
4. ໃຫ້ອອກ ຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 92 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ເປັນຕົ້ນ ການດຳເນີນທຸລະກິດ ກ່ຽວກັບການໃຫ້ວັກຊີນກັນພະຍາດ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ປະຕິບັດຕາມການແນະນຳ ທາງວິຊາການຂອງກະຊວງສາທາລະນະສຸກ ຈະຖືກປັບໃໝ ຕາມກົດໝາຍ ຫຼື ລະບຽບການ.

**ມາດຕາ 93 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ກໍ່ຄວາມເສຍຫາຍ ໃຫ້ແກ່ຜູ້ອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 94 ມາດຕະການທາງອາຍາ**

ບຸກຄົນໃດ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ເປັນຕົ້ນ ລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ທີ່ພາໃຫ້ ພິການ ຫຼື ເສຍຊີວິດຈະຖືກລົງໂທດຕາມກໍລະນີ ເບົາ ຫຼື ໜັກ.

## ພາກທີ XIII
## ບົດບັນຍັດສຸດທ້າຍ

**ມາດຕາ 95 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 96 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້